# ຂ່າວໃບລານ

ໂຄງການປົກປັກຮັກສາໜັງສືໃບລານລາວ ການຮ່ວມມືລາວ-ເຢຍຣະມັນ ປີທີ II ສະບັບທີ 4* ມິຖຸນາ 1994
PRESERVATION OF LAO MANUSCRIPTS PROGRAMME LAO-GERMAN COOPERATION

## ແຜນການເຄື່ອນໄຫວ ປີທີ II ຂອງໂຄງການ

ໂຄງ ການປົກປັກຮັກສາໜັງສືໃບລານລາວ ມີທິດທາງ ແລະ ແຜນການດຳເນີນງານ ໃນຂອບເຂດທົ່ວປະເທດ ກຳນົດຢູ່ໃນໄລຍະ 8 ປີ, ແຕ່ໃນທົ່ວປະເທດ ມີວັດຢູ່ 1.700 ກວ່າແຫ່ງ ກໍ່ເປັນການຍາກທີ່ຈະສາມາດລົງໄປສູ່ທຸກໆວັດໄດ້, ສະນັ້ນ ຂອບເຂດຂອງ ໂຄງການ ຈະມີການ ເລືອກເຟັ້ນເອົາວັດ ທີ່ມີຄວາມສຳຄັນເກົ່າແກ່ ແລະ ມີເອກະສານຫລາຍ ເຊິ່ງໂຄງການ ຄາດຄະເນໄວ້ວ່າ ຈະສາມາດ ສຳຫລວດໄດ້ປະມານ 250 ວັດ ຢູ່ໃນທົ່ວປະເທດ.

ໃນປີທີ 2 ຂອງໂຄງການ ພາຍຫລັງທີ່ ກະກຽມແຜນໃນເບື້ອງຕົ້ນ ເພື່ອຈະຈັດຕັ້ງການເຄື່ອນໄຫວ ສຳຫລວດ ແລະ ປົກປັກຮັກສາໜັງສືໃບລານ ຢູ່ແຂວງຫລວງພະບາງ ແຕ່ເມື່ອໄດ້ມີ ການຄົ້ນຄວ້າ ແລະ ເກັບກຳຂໍ້ມູນເພີ່ມເຕີມແລ້ວ ທາງຄະນະໂຄງການເຫັນວ່າ ມີເງື່ອນໄຂ ທີ່ຈະ ຂະຫຍາຍພື້ນທີ່ການສຳຫລວດ ແລະ ປົກປັກຮັກສາກວມລວມເອົາ ແຂວງໄຊຍະບູລີ, ອຸດົມໄຊ ແລະ ເຂດຊຽງຮ່ອນ - ຫົງສາ ເນື່ອງຈາກວ່າບັນດາແຂວງດັ່ງກ່າວ ມີພື້ນທີ່ໃກ້ຄຽງຕິດຈອດກັນ, ການຄົມນາຄົມ ກໍ່ເຫັນວ່າ ມີເງື່ອນໄຂສະດວກ ເຖິງວ່າຈະເຮັດໃຫ້ວັນງານ ການສຳຫລວດ ໃນປີທີ II ແກ່ຍາວໄປຈົນເຖິງປີ 1995. ຖ້າຄິດໄລ່ກັບເປັນວັນງານ ຈະມີຢູ່ ປະມານ 252 ວັນງານຕໍ່ປີ ການສຳຫລວດ ແລະ ປົກປັກຮັກສາຈະເລີ່ມຕົ້ນທີ່ເອກກະສານ ທີ່ມີຄວາມສຳຄັນໃນຈຳນວນ 30 ວັດ ໃນເທສະບານເມືອງຫລວງພະບາງ ແລະ ໜັງສືໃບລານ ທີ່ເກັບຮັກສາໄວ້ ໃນພິພິທະພັນພະລາຊະວັງເກົ່າ. ນອກຈາກນີ້ ຈະຂະຫຍາຍອອກໄປສູ່ວັດຕ່າງໆ ຢູ່ເມືອງນ້ຳບາກ, ປາກອູ, ຊຽງເງິນ ແລະ ເມືອງນານ.

ພ້ອມດຽວກັນ ກໍຈະຕ້ອງສັບປ່ຽນ ເຄື່ອນຍ້າຍໄປສູ່ແຂວງໄຊຍະບູລີ, ອຸດົມໄຊ ແລະ ເຂດຊຽງຮ່ອນ - ຫົງສາ ໂດຍອີງໃສ່ຄວາມສະດວກຂອງເສັ້ນທາງຄົມນາຄົມ ແຕ່ລະລະດູການ ໃນແຕ່ລະແຂວງ.

ໃນໄລຍະເລີ່ມຕົ້ນການສຳຫລວດ ທາງໂຄງການຈະໃຫ້ພະນັກງານວິຊາການ ຊ່ວຍຕິດ ຕາມ ແລະ ແນະນຳການປະຕິບັດງານ ຂອງໜ່ວຍສຳຫລວດ ໃນແຕ່ລະ

☞

### ເຊີນອ່ານ

ສຳມະນາວ່າດ້ວຍວຽກງານໃບລານ
ທີມງານຖ່າຍໄມໂຄຣຟີມເຄື່ອນໄຫວ...
ນິລະດົກທາງພູມປັນຍາ
ການເຄື່ອນໄຫວ ຂອງໂຄງການ...

# ທີມງານຖ່າຍໄມໂຄຼຟິມ ເຄື່ອນໄຫວຢູ່ເມືອງໄຊທານີ

✷ *ໂດຍ ລານກ້ອນ*

ໄປພ້ອມກັບການປົກປັກຮັກສາ ຫນັງສືໃບລານ ດ້ວຍວິທີ ວິທະຍາ ທາງໂຄງການ ໄດ້ມີການຈຳແນກເລືອກເຟັ້ນເອກະສານ ທີ່ມີຄວາມສຳຄັນຈຳນວນຫນຶ່ງ ຖ່າຍເຂົ້າໄມໂຄຼຟີມ, ເປັນຕົ້ນວ່າ ເອກະສານທີ່ມີອາຍຸເກົ່າແກ່, ຫາຍາກ ມີຫນ້ອຍສະບັບ, ເອກະສານທີ່ມີຄຸນຄ່າ ທາງວັນນະກຳ ໂດຍສະເພາະ ແມ່ນປະເພດ ທີ່ບັນຈຸເນື້ອໃນກ່ຽວກັບພູມປັນຍາ ຂອງຄົນບູຮານ, ທີ່ມີຫລັກຖານທາງ ປະຫວັດສາດ, ໂຫລາສາດ, ຕຳລາຢາ ແລະ ວິທີປິ່ນປົວພະຍາດ, ຫລັກໄວຍະກອນ ແລະ ປະມວນຄຳສັບອື່ນໆ. ທັງຫມົດນີ້ ຈັດເຂົ້າໃນປະເພດຫນັງສື ທີ່ມີຄວາມສຳຄັນ ຄວນຖ່າຍໄມໂຄຼຟີມເອົາໄວ້ ເພື່ອຮັບປະກັນຍາວນານ ແລະ ຫລີກເວັ້ນການສູນເສຍ.

ພາຍຫລັງທີ່ລັດຖະບານ ສ.ສ. ເຢຍຣະມັນ ມອບເຄື່ອງຖ່າຍໄມໂຄຼຟີມ ໃຫ້ກັບລັດຖະບານ ແຫ່ງ ສ.ປ.ປ. ລາວ ເພື່ອປະກອບສ່ວນເຂົ້າໃນການປົກປັກຮັກສາຫນັງສືໃບລານລາວ ໃນວັນທີ 28 ມັງກອນ 1994, ຢູ່ທີ່ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ, ຕາງຫນ້າຝ່າຍລາວ ແມ່ນທ່ານ ບົວບານ ວໍລະຂຸນ ຮອງລັດຖະມົນຕີກະຊວງຖະແຫລງຂ່າວແລະ ວັດທະນະທຳ ຕາງຫນ້າຝ່າຍລັດຖະບານ ສ.ສ. ເຢຍຣະມັນ ແມ່ນທ່ານ ເຮີແບັກ ໂຟນເຕີແບັງ ອຸປະທູດຊົ່ວຄາວ ປະຈຳສະຖານເອກ ອັກຄະລັດຖະທູດ ແຫ່ງ ສ.ສ. ເຢຍຣະມັນປະຈຳລາວ ໂດຍຊ້ອງຫນ້າ ພະນັກງານຂັ້ນນຳ ຈາກກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ແລະ ກະຊວງການຕ່າງປະເທດເຂົ້າຮ່ວມ.

ເລີ່ມແຕ່ວັນທີ 7 ເມສາ 1994, ຈະເລີນໄຊ ພົມມະວົງສາ ຫົວຫນ້າທີມງານຜູ້ຫນຸ່ມນ້ອຍ ແຕ່ເຕັມປ່ຽມ ດ້ວຍຄວາມສາມາດ ກໍ່ໄດ້ນຳພາທີມງານລົງທົດສອບ ປະສິດທິພາບຂອງເຄື່ອງຖ່າຍ ໄມໂຄຼຟີມ ເຄື່ອງທຳອິດຂອງປະເທດລາວ ໂດຍເລີ່ມຈາກ ວັດບ້ານໄຊ ເປັນແຫ່ງທຳອິດ ດ້ວຍຄວາມຫ້າວຫັນ ຖ່າຍທຳໄປນຳຖອດຖອນບົດຮຽນໄປພ້ອມ. ໃນໄລຍະເລີ່ມຕົ້ນ ປະຊາຊົນ ສ່ວນຫລາຍ ຍັງບໍ່ທັນເຂົ້າໃຈ ຕໍ່ວຽກງານ ດັ່ງກ່າວ ເພາະເປັນວຽກທີ່ໃຫມ່ ສຳລັບປະເທດເຮົາ ທີ່ໃຊ້ເຄື່ອງຖ່າຍ ໄມໂຄຼຟີມ ເຂົ້າໃນການປົກປັກຮັກສາຫນັງສືໃບລານ ດັ່ງນັ້ນ ຈຶ່ງມີແຕ່ຄູບາອາຈານ ເພິ່ນ ມາເຊັດຖູ

## ການເຄື່ອນໄຫວ...

ແຂວງ ໂດຍສົມທົບກັບ ທາງພະແນກຖະແຫລງຂ່າວ -ວັດທະນະທຳ, ພ.ສ.ລ ແຂວງ. ການປະຕິບັດງານ ຂອງຫນ່ວຍ ສຳຫລວດ ໃນແຕ່ລະທ້ອງຖິ່ນ ແມ່ນຈະປະສານສົມທົບ ຢ່າງສະຫນິດແຫນ້ນ ກັບພະສົງສາມະເນນ ໃນແຕ່ລະວັດ ພ້ອມດ້ວຍ ເຖົ້າແກ່, ພໍ່ແມ່ປະຊາຊົນ, ຜູ້ຊົງຄຸນວຸດທິ ທັງນີ້ກໍ່ເພື່ອສະແດງ ເຈດຕະນາອັນບໍລິສຸດຂອງໂຄງການ ອີກປະການຫນຶ່ງ ກໍ່ເພື່ອສ້າງເງື່ອນໄຂໃຫ້ທາງພື້ນຖານເອງ ໄດ້ເຂົ້າມາມີສ່ວນຮ່ວມ ໃນວຽກງານ ດັ່ງກ່າວ ເພາະພາຍຫລັງ ການສຳຫລວດເກັບກຳຂໍ້ມູນ ສຳເລັດເສັດສິ້ນແລ້ວ ພາລະບົດບາດໃນການປົກປັກ ຮັກສາຕໍ່ໄປ ກໍ່ຈະເປັນຫນ້າທີ່ຂອງພະສົງ ແລະ ຊາວບ້ານເອງ.

ແລະ ອ່ານໜັງສືໃບລານຊ່ວຍທີມງານ ມາເຖິງວັນທີ 22 ເມສາ ອະນຸກຳມະການກໍ່ສຳເລັດເສັດສິ້ນ ສາມາດຖ່າຍ ໜັງສືໃບລານໄດ້ຈຳນວນ 25 ເລື່ອງ ໃນນັ້ນ ມີ 2.710 ໃບ, ແຕ່ເປັນ ໜ້າເສຍດາຍ ທີ່ຍັງມີບາງເລື່ອງທີ່ຊອກບໍ່ເຫັນ ເຊັ່ນ : ເລື່ອງ ປະຖົມກັບປະ, ແລະ ຍັງມີເລື່ອງ ອໍລະພິມພາ ຕ້ອງຍົກເລີກຖ່າຍ ເພາະໜັງສືບາງຜູກອາດຫາຍໄປ.

ຈາກການລົງເຄື່ອນໄຫວເບື້ອງຕົ້ນນີ້ ກໍ່ໄດ້ຊ່ວຍໃຫ້ຄະນະປະສຳຫລວດ ໄດ້ຄ່ອຍໆຄຸ້ນເຄີຍກັບ ວຽກງານ ໂດຍໄດ້ຮັບການຊີ້ນຳ ຈາກທາງ ທ່ານສາສະດາຈານ ດຣ. ຮາຣັນ ຮຸນດິອຸສ ຊ່ຽວຊານ ດ້ານໜັງສືໃບລານ ຈາກ ສ.ສ. ເຢຍລະມັນ ທ່ານ ນາງ ດາລາ ກັນລະຍາ ຫົວໜ້າໂຄງການ ແລະ ທ່ານ ບຸນ ເລີດ ທຳມະຈັກ ຮອງຫົວໜ້າໂຄງການ ກໍ່ໄດ້ລົງໃກ້ຊິດພ້ອມ ທັງເປັນຜູ້ປະສານງານ.



ເຄື່ອນຍ້າຍໄປວັດແສນສຸກ ບ້ານໄຜ່ລ້ອມ ແຍກຈາກທາງເລກທີ 13 ໃຕ້ເຂົ້າໄປປະມານ 1 ກມ ທາງແວ່ຢູ່ໜຶ່ງກັບທາງແຍກໄປກະແສດນາບົງ, ບ້ານນີ້ ເປັນບ້ານທີ່ອຸດົມສົມບູນ ໄປດ້ວຍ ເຂົ້າປາອາຫານແຫ່ງໜຶ່ງ ໃນເຂດເມືອງໄຊທານີ. ປະຊາຊົນມີຄວາມສັດທາ ເຫລື້ອມໃສຕໍ່ວັດວາ ສາສະໜາ, ມັກນ້ອມຊື່ນ, ມີຄວາມສາມັກຄີປອງດອງກັນດີ ຊຸຍາອາຈານກໍ່ຫາວຫັນ, ເຮັດໃຫ້ທີມງານລົງໄປຮອດ, ຍາທ່ານກອງມີ ເຈົ້າອະທິການວັດ ທັງເປັນຄະນະ ພ.ສ.ລ. ເມືອງ ກໍ່ໄດ້ອູໂລ່ງໃຫ້ຊາວ ບ້ານຮັບຮູ້ ແລະ ເຂົ້າໃຈຕໍ່ການລົງມາປະຕິບັດໜ້າທີ່ຂອງທີມງານ ກໍ່ຄືການປົກປັກຮັກສາໜັງສືໃບລານ ດ້ວຍວິທີ ທີ່ທັນສະໄໝ, ເຖິງວ່າຈະຈອບກັບໄລຍະທີ່ຊາວບ້ານ ທັງເຖົ້າແກ່ຍິງຊາຍ ພວມປູກລະດົມກັນກໍ່ສ້າງຕ່າຍວັດ ເພື່ອໃຫ້ທັນກັບບຸນບັ້ງໄຟ ຂອງບ້ານກໍ່ຕາມ ແຕ່ເຖົ້າແກ່ແນວໂຮມ ຈີວ-ແນນ ກໍ່ຍັງມາຊ່ວຍເຊັດຊ່ວຍມັດນັບໜັງສືບາງຄົນ ກໍ່ຄືນຄືວເອົາໜັງສືໃບລານ ທີ່ຢູ່ຕາມບ້ານຕາມເຮືອນມາເຊັດມາດູແລະ ໃຫ້ທີມງານ ຖ່າຍໄມໂຄຼຟີມນຳອີກ.

ຈາກລຳພັງ ຫົວໜ້າແນວໂຮມ ບ້ານ ໃຫ້ການຕ້ອນຮັບ ດ້ວຍຄວາມອົບອຸ່ນ ບໍ່ຈັກໜ່າຍ ຈາກສົມ ຂອງພວກ ເຮັດໃຫ້ທີມງານມີກຳລັງໃຈເຮັດວຽກຂັ້ນຕື່ມ, ລຸງທັງມີນິດໄສທີ່ເປັນກັນເອງ ແລະ ເວົ້ານ້ອຍຄົນນ້ອຍ ລຸງມັກເວົ້າຂຶ້ນເລື້ອຍໆ ວ່າ : "ພວກເຮົາຄອງຖ່າຍຢູ່ ເພາະມີບາງຄົນ ມີໜັງສືແຕ່ຍັງບໍ່ໄດ້ມາເຊັດມາລ້າງຄືຂອງຜູ້ອື່ນ, ທາງຍາທ່ານເພີ້ນກໍ່ປຸກລະດົມໃຫ້ຊາວບ້ານເຂົ້າໃຈ ແລະ ຊ່ວຍກັນປົກປັກຮັກສາ, ຊ່າງມາໃໝ່ ເພີ່ນກໍ່ຢາກໃຫ້ເອົາມາເຊັດມາລ້າງ ແລ້ວ ກໍ່ຖ່າຍໄວ້ເພື່ອຈະໃຫ້ລູກຫລານຮຸ່ນຕໍ່ໄປ ໄດ້ຄົ້ນຄວ້າສຶກສາ" ຍ້ອນການຮ່ວມມືເປັນຢ່າງດີ ຈາກທາງພະສົງ ແລະ ຊາວບ້ານ ການປະຕິບັດວຽກງານ ດຳເນີນໄປເປັນເວລາ 10 ມື້ ກໍ່ສຳເລັດ ສາມາດຖ່າຍ ເອກະສານທີ່ສຳຄັນໄດ້ 17 ເລື່ອງລວມມີ 1.612 ໃບ. ໃນໂອກາດດັ່ງກ່າວ ທ່ານ ບົວພານ ວໍລະວຸນ ຮອງລັດຖະມົນຕີ ກະຊວງຖະແຫລງຂ່າວ ແລະ

➩

ວັດທະນະທຳ ທ່ານ ບົວລຽນ ສີຄັນໄຊ ຫົວໜ້າຫ້ອງການ ກະຊວງ ແລະ ທ່ານ ຄຳແສງດາວ ປະຖຸມມະວົງ ຮອງຫົວໜ້າໂຄງການ ກໍໄດ້ລົງຢ້ຽມຢາມພ້ອມນັ້ນ ກໍໄດ້ ພົບປະໂອ້ລົມກັບຊາວບ້ານ ຕໍ່ກັບທິດທາງ ແລະ ນະໂຍບາຍຂອງລັດຖະບານເຮົາ ໃນການຟື້ນຟູ ແລະ ປົກປັກຮັກສາເອກະສານທີ່ມີຄຸນຄ່າ ເພື່ອນຳໃຊ້ໃຫ້ເກີດປະໂຫຍດ.



* **ມາໃນວັນທີ 9 ກຶດສະພາ** ອີງຕາມຄວາມເຫມາະສົມ ດ້ານສະຖານທີ່ ທີມງານ ຕົກລົງເຫັນດີເອົາວັດແສນຊຸມ ບ້ານໄຜ່ລ້ອມ ເປັນສະຖານທີ່ຖ່າຍທຳໜັງສືໃບລານອີກ 3 ວັດ ທີ່ຢູ່ໃກ້ຄຽງ ຄືວັດໂພສີສົມພອນ ບ້ານຫົວຊຽງເໜືອ, ວັດໂພໄຊ ບ້ານຫົວຊຽງໃຕ້ ແລະ ວັດສີອຸ່ມ ຊື່ນ ບ້ານສ້າງຫົວບໍ່, ພາຍຫລັງທີ່ທ່ານບຸນເລີດ ທັມມະຈັກ ຮອງຫົວໜ້າໂຄງການ ໄດ້ລົງໄປພົວພັນ ແລະ ໂອ້ລົມ ກັບທາງເຈົ້າອະທິການວັດທັງ 3 ວັດແລ້ວ, ທາງທີມງານ ຈຶ່ງໄດ້ມາໂຍກຍ້າຍໜັງສື ໄປຖ່າຍທຳໂດຍມີເຖົ້າແກ່ແນວໂຮມ ແຕ່ລະບ້ານ ຕິດຕາມໄປພ້ອມ, ໃຊ້ເວລາທັງໝົດ 15 ມື້ ສາມາດຖ່າຍເອກະສານ ທີ່ສຳຄັນໄດ້ 51 ເລື່ອງ ລວມມີ 5.358 ໃບລານ. ແຕ່ຢູ່ທັງ 3 ວັດນີ້ ສະພາບການເກັບມ້ຽນຍັງສັບສົນຢູ່ ເຮັດໃຫ້ໜັງສືຂາດຫາຍໄປ ຢູ່ຫລາຍເລື່ອງ ດັ່ງນັ້ນ ເອກະສານທີ່ສຳຄັນເຫລົ່ານັ້ນ ທີມງານຈຶ່ງບໍ່ສາມາດຖ່າຍທຳໄດ້.

ພາຍຫລັງສຳເລັດວຽກງານແລ້ວ ທາງທີມງານກໍໄດ້ມອບໜັງສືໃບລານທັງໝົດຄືນໄວ້ ຢູ່ແຕ່ລະວັດ ເພື່ອໃຫ້ພະສົງ ແລະ ຊາວບ້ານປົກປັກຮັກສາຕໍ່ໄປ.

ຫຍັບຂຶ້ນໄປຕາມສາຍທາງ ເລກທີ 13 ໃຕ້ ບໍ່ພໍເທົ່າໃດກິໂລແມັດ ກໍ່ເຖິງບ້ານນາຊອນ ຊຶ່ງເປັນບ້ານເກົ່າແກ່, ເປັນບ້ານໃຫຍ່ ທັງເປັນໃຈກາງຂອງເຂດນີ້ ເອກະສານໃບລານ ທີ່ສຳຄັນຢູ່ນີ້ ມີຢ່າງຫລວງຫລາຍ ເພາະແຕ່ກ່ອນ ເຄີຍມີຄູບາຜູ້ມີຄວາມຮູ້ ຄວາມຫລັກ ທັງເປັນນັກຈານ ໜັງສືໃບລານ ທີ່ລືຊື່ ແລະ ປັດຈຸບັນກໍ່ ຍັງມີຜູ້ ສືບທອດຢູ່ຫລາຍຄົນ ຄື: ພໍ່ຕູ້ຮຸ່ງ, ພໍ່ຕູ້ສົມຄວນ, ພໍ່ຕູ້ຍາດ... ຕອນທຳອິດ ທີ່ທີມງານ ລົງໄປຮອດ ກໍ່ມີຄວາມອຸ່ນໃຈ ເນື່ອງຈາກວ່າ ເປັນບ້ານ ຂອງທ່ານນາງ ຫນູແຊງ ຫົວໜ້າເຂດຜູ້ທ້າວທັນ ແລະເຂົ້າໃຈ ຕໍ່ວຽກງານການປົກປັກຮັກສາໜັງສື ໃບລານດີ. ເອື້ອຍໄດ້ເວົ້າດ້ວຍທ່າທາງທີ່ເປັນກັນເອງ ກັບຂ້າພະເຈົ້າວ່າ : " ຫລັງຈາກ ທີ່ໂຄງການ ປົກປັກຮັກສາໜັງສືໃບລານ ໄດ້ລົງມານຳພາປະຊາຊົນ ພວກເຮົາ ອະນຸລັກຮັກສາແລ້ວຈາກນັ້ນມາກໍ່ເຮັດໃຫ້ພວກເຮົາ ມີສະຕິຕື່ນຕົວ ແລະ ຮູ້ຈັກ ຫວງແຫນ ມໍລະດົກ ຂອງຕົນຂຶ້ນ, ປັດຈຸບັນນີ້ ຜູ້ຂຽນ, ຜູ້ຈານ ກໍ່ສ້າງຂຶ້ນມາ ແລະ ກໍ່ມີການນຳໃຊ້ຢູ່ເລື້ອຍ ທີມງານຖ່າຍໄມໂຄຟິມ ມາສືບຕໍ່ປົກປັກຮັກສາກໍ່ຍິ່ງ ເປັນການດີ ເພື່ອນຳໄປເຜີຍແຜ່, ມີການຄົ້ນຄວ້າ ແລະ ນຳໃຊ້ ໂດຍສະເພາະ ວັນນະຄະດີ, ນິທານບູຮານ ທີ່ໃຊ້ເຂົ້າ ໃນຫລັກສູດການສຶກສາ ຍັງຂາດເຂີນ ຢູ່... "

ປັດຈຸບັນ ທີມງານຖ່າຍໄມໂຄຟິມ ພວມດຳເນີນວຽກງານຢູ່ທີ່ນັ້ນ ດ້ວຍຄວາມເອົາໃຈໃສ່ ໂດຍການອູ້ມຊູຊ່ວຍເຫລືອຈາກ ທາງອຳນາດການປົກຄອງ ພະສົງ ແລະ ຊາວບ້ານ, ເພື່ອປົກປັກ ຮັກສາເນື້ອໃນເອກະສານທີ່ມີຄຸນຄ່າໄວ້ໃຫ້ອະນຸຊົນ ຮຸ່ນຫລັງໄດ້ສຶກສາ ອຳຣຽນຕໍ່ໄປ.

# ສຳມະນາວ່າດ້ວຍ ວຽກງານປົກປັກຮັກສາໜັງສືໃບລານ

*ຈັນສະໝຸດ ທີລະກຸນ ລາຍງານຂ່າວ*

**ເພື່ອ** ປະຕິບັດຕາມແຜນການ ແລະ ທິດທາງໜ້າທີ່ ວຽກງານ ຂອງໂຄງການປົກປັກຮັກສາໜັງສືໃບລານລາວ ປີທີ II , ສົກປີ 1993 - 94 ໂດຍທຶນຊ່ວຍເຫລືອ ຂອງລັດຖະບານ ສ.ສ. ເຢຍຣະມັນ, ເພື່ອເຜີຍແຜ່ມໍລະດົກ ທາງດ້ານພູມປັນຍາ ຂອງ ບັນພະບູລຸດລາວ ສ້າງທັດສະນະຄວາມເຂົ້າໃຈ ຄວາມຮັບຮູ້ກ່ຽວກັບເອກກະສານບູຮານ ການປົກປັກຮັກສາ ແລະ ການຄົ້ນຄວ້າ ໃນວັນທີ 1-3 ເມສາ 1994 ກັບພະແນກຖະແຫລງຂ່າວ - ວັດທະນະທຳ ແຂວງຫລວງພະບາງ ສົມທົບກັບ ຄະນະໂຄງການ ໄດ້ເປີດກອງປະຊຸມ ສຳມະນາວຽກງານ ປົກປັກຮັກສາໜັງສືໃບລານລາວ "ຢູ່ຫ້ອງປະຊຸມ ພູສີ" ພະລາຊະວັງເກົ່າຫລວງພະບາງພາຍໃຕ້ການ ເປັນປະທານ ຂອງທ່ານ ບຸນມີ ມະນີວົງ ຮອງເຈົ້າແຂວງຫລວງພະບາງ. ເປັນກຽດເຂົ້າຮ່ວມ ໃນກອງປະຊຸມຄັ້ງນີ້ ມີ ທ່ານ ດຣ. ທອງຄຳ ອ່ອນມະນີສອນ ຫົວໜ້າກົມ ວັນນະຄະດີ ແລະ ວັດທະນະທຳ ມະຫາຊົນ, ທ່ານ ນາງ ດາລາ ກັນລະຍາ ຮອງຫົວໜ້າກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ ຫົວໜ້າໂຄງການປົກປັກຮັກສາໜັງສືໃບລານລາວ, ທ່ານນາງ ແອັງເກີ ຄອສເປີ ທູດວັດທະນະທຳແຫ່ງ ສ.ສ. ເຢຍຣະມັນ ຕາງໜ້າສະຖານທູດ ສ.ສ. ເຢຍຣະມັນ ປະຈຳລາວ, ທ່ານ ສາສະດາຈານ ດຣ. ຮາຣັນ ຣຸນຄິອຸສ ຊ່ຽວຊານ ດ້ານຄຳພີ ໃບລານ ຈາກ ສ.ສ. ເຢຍຣະມັນ, ພະອາຈານສຳລິດ ສຸກສົມຫວັງ ຄະນະ ພຸດທະສາສະໜາສຳພັນສູນກາງ, ບັນດານັກວິຊາການ ຈາກມະຫາວິທະຍາໄລຊຽງໃໝ່ ແຫ່ງຣາດຊະອານາຈັກໄທ, ບັນດານັກຄົ້ນຄວ້າ, ພະສົງສາມະເນນ ຜູ້ຊົງຄຸນວຸດທິ, ເຖົ້າແກ່ແນວໂຮມ, ພະແນກການອ້ອມຂ້າງແຂວງ ບັນດາ ສຳມະນາກອນ ພາຍໃນແຂວງ ຫລວງພະບາງ ແລະ ຈາກບັນດາ ແຂວງພາກເໜືອ ເຊັ່ນ: ແຂວງຫລວງນ້ຳທາ, ໄຊຍະບູລີ, ອຸດົມໄຊ, ບໍ່ແກ້ວ, ເຂດພິເສດຊຽງຮ່ອນ - ຫົງສາ ແລະ ຜົ້ງສາລີ .




ຈຸດປະສົງ ເປົ້າໝາຍ ຂອງກອງປະຊຸມ ສຳມະນາຄັ້ງນີ້ ເພື່ອຕີລາຄາ ສະພາບການ ປົກປັກຮັກສາ ໜັງສືໃບລານ ມໍລະດົກ ວັດທະນະທຳ ຂອງຊາດ, ປຸກລະດົມ ສະຕິຕື່ນຕົວຕໍ່ ວຽກງານ ດັ່ງກ່າວ ຂອງ ບັນດາ ອົງການຈັດຕັ້ງ ທີ່ກ່ຽວຂ້ອງຕະຫລອດເຖິງພະສົງ ສາມະເນນ ແລະ ຊາວ ບ້ານ. ເພື່ອເປັນການແນະນຳ ວິທີວິທະຍາ ແລະ ວິຊາການໃນການສຳຫລວດ ແລະ ປົກປັກຮັກ ສາໜັງສື

➡

ໃບລານ ໃຫ້ແກ່ພະນັກງານ ທີ່ກ່ຽວຂ້ອງ, ຈັດຕັ້ງຈຸປະຕິບັດງານສຳຫລວດ ທີ່ປະກອບ ດ້ວຍພະນັກງານ ຂອງແຂວງ ເພື່ອເຮັດໜ້າທີ່ສຳຫລວດ ແລະ ປົກປັກ ຮັກສາ ໜັງສືໃບລານ ພາຍໃນ ແຂວງຂອງຕົນ.

ໃນ 3 ມື້ຂອງການດຳເນີນກອງປະຊຸມ ໄດ້ມີການຄົ້ນຄວ້າ ແລກປ່ຽນຄວາມຄິດຄວາມເຫັນ ໃນຫລາຍບັນຫາ ເປັນຕົ້ນວ່າ : ການປະລິວັດ ພິມເຜີຍແຜ່ ເອກະສານບູຮານທີ່ສຳຄັນ ແລະ ມີຄຸນປະໂຫຍດຕໍ່ສັງຄົມ, ການຄົ້ນຄວ້າວັນນະຄະດີບູຮານ, ກົດໝາຍບູຮານ, ອັກສອນສາດ, ວຽກງານການສົ່ງເສີມ ການ ສຶກສາແລະພັດທະນາຄວາມຮູ້ ກ່ຽວກັບ ໜັງສືໃບລານ, ໜັງສືທຳໃຫ້ແກ່ຄົນຮຸ່ນໃໝ່. ໃນໂອກາດດຽວກັນນີ້ ຜູ້ຕາງໜ້າຈາກແຕ່ລະແຂວງ ກໍ່ໄດ້ພັດປ່ຽນກັນຂຶ້ນ ລາຍງານສະພາບການປົກປັກຮັກສາ ໜັງສືໃບລານ ຢູ່ໃນແຂວງຂອງຕົນ ໃນໄລຍະຜ່ານມາ ພ້ອມກັບການສະເໜີຄຳຄິດຄຳເຫັນ ເຊິ່ງແຕ່ລະຄົນໄດ້ສະແດງຄວາມຍິນດີຕໍ່ທິດທາງ ແລະ ແຜນການຂອງໂຄງການ ກໍ່ຄືລັດຖະບານ ທີ່ມີ ແນວທາງນະໂຍບາຍ ໃນການອະນຸລັກ ມໍລະດົກທາງ ວັດທະນະທຳ. ຍ້ອນວ່າ ສະພາບທົ່ວໄປຂອງໜັງສື ໃບລານ ທີ່ມີຢູ່ ຍັງບໍ່ໄດ້ ມີການ ປົກປັກຮັກສາເທົ່າທີ່ຄວນ ຜ່ານມາກໍ່ມີການຕົກເຮ່ຍເສຍຫາຍໄປ ຢ່າງຫລວງຫລາຍ ຍ້ອນສາເຫດຫລາຍປະການ ເຊິ່ງຜ່ານມາໃນແຕ່ລະ ແຂວງກໍ່ໄດ້ມີທິດທາງ ໃນການ ປົກປັກຮັກສາ ແຕ່ຍັງ ຂາດ ບາງປັດໃຈ ເປັນຕົ້ນວ່າ ນັກວິຊາການ ແລະ ທຶນຮອນ ດັ່ງນັ້ນເມື່ອທາງ ໂຄງການ ມີທິດທາງ ແລະ ແຜນການ ໃນການປົກປັກຮັກສາ ແຕ່ລະພາກສ່ວນຄືທາງແຂວງ, ເມືອງ, ພະສົງສາມະເນນ, ຊາວບ້ານ ຕ່າງກໍ່ຍິນດີ ທີ່ຈະໃຫ້ການຮ່ວມມື ແລະ ປະສານສົມທົບ ເພື່ອເຮັດໃຫ້ ວຽກງານດັ່ງກ່າວ ໄດ້ຮັບຜົນສຳເລັດ.



ໃນຕອນບ່າຍຂອງວັນທີ 2 ເມສາ 1994 ເຊິ່ງເປັນມື້ທີສອງ ຂອງການດຳເນີນກອງປະ ຊຸມ ບັນດາແຂກ ແລະ ສຳມະນາກອນ ຍັງໄດ້ຢ້ຽມຊົມ ຫໍພິພິທະພັນ ພະລາຊະວັງເກົ່າຫລວງພະບາງ, ຢ້ຽມຊົມຫ້ອງ ເກັບມ້ຽນໜັງສືຜູກໃບລານ ເຊິ່ງບັນຈຸເອກະສານທີ່ເກົ່າແກ່ ແລະ ສຳຄັນ ໄວ້ເຖິງ 6.000 ກວ່າຜູກ.

ໃນຕອນເຊົ້າຂອງວັນທີ 3 ເມສາ 1994 ກອງປະຊຸມ ໄດ້ລົງເລິກ ທາງດ້ານວິຊາການໃນການສຳຫລວດ ໃນນີ້ ບັນດາສຳມະນາກອນ ໄດ້ຮັບຟັງການ ແນະນຳ ວິທີວິທະຍາ ໃນການບັນ ທຶກຂໍ້ມູນ, ຈັດແຍກໝວດໝູ່ຕະຫລອດຮອດການອະນາໄມ, ມັດ, ຫໍ່ ແລະ ຈັດມ້ຽນ ຈາກນັ້ນ ຈຶ່ງໄດ້ເຮັດທົດລອງ ແຕ່ລະຂັ້ນຕອນ ໃນການສຳຫລວດ ເພື່ອຮັບຮູ້ ແລະ ເຂົ້າໃຈ ສາມາດ



ນຳໃຊ້ ວິຊາການດັ່ງກ່າວ ເຂົ້າໃນການປົກປັກຮັກສາ ຫນັງສືໃບລານ ໃນທ້ອງຖິ່ນຂອງຕົນ.

ພິເສດໃນກອງປະຊຸມ ສຳມະນາດັ່ງກ່າວ ທາງເຈົ້າພາບ ກໍ່ຄື ພະແນກຖະແຫລງຂ່າວ ແລະ ວັດທະນະທຳ ແຂວງຫລວງພະບາງ ຍັງໄດ້ນຳເອົາການສະແດງຂັບລຳ ແລະ ດົນຕີພື້ນ ເມືອງ ທີ່ມີຊື່ສຽງ 3 ຄະນະ ຄື : ຈາກບ້ານທາດຫລວງ, ບ້ານຫລັກ 8, ບ້ານ ຊຽງແມນ ມາເສີມສ້າງບັນຍາກາດ ໃຫ້ແກ່ບັນດາ ຜູ້ເຂົ້າຮ່ວມ ກອງປະຊຸມ ໄດ້ເບິ່ງໄດ້ຊົມ ເຊິ່ງໄດ້ສ້າງ ຄວາມມ່ວນຊື່ນ ໃຫ້ແກ່ຜູ້ເຂົ້າຊົມ ຕະຫລອດທຸກລາຍການ.

ຜ່ານການດຳເນີນວຽກງານ ມາເປັນເວລາ 3 ວັນ, ມາເຖິງ ຕອນບ່າຍຂອງວັນທີ 3 ເມສາ 1994 ກອງປະຊຸມກໍ່ໄດ້ເປັນເອກກະພາບກັນ ສະຫລຸບຕີລາຄາຫມາກຜົນທີ່ໄດ້ຮັບຈາກ ກອງປະຊຸມສຳມະນາ ຄັ້ງນີ້ ດັ່ງທີ່ທ່ານນາງດາລາ ກັລຍາ ຮອງຫົວຫນ້າກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ, ຫົວຫນ້າໂຄງການ ໄດ້ກ່າວສະຫລຸບ ໂດຍ ສັງເຂບວ່າ :

"ກອງປະຊຸມ ສຳມະນາຄັ້ງນີ້ ແມ່ນມີຄວາມຫມາຍ ສຳຄັນຕໍ່ການອະນຸລັກຮັກສາມໍລະດົກ ທາງ ວັດທະນະທຳ. ເຫັນໄດ້ ນະໂຍບາຍອັນຖືກຕ້ອງຂອງລັດຖະບານ ສ.ປ.ປ. ລາວ ຕໍ່ກັບການປົກປັກ ຮັກສາມູນເຊື້ອອັນເປັນ ເອກະລັກຂອງຊາດເຮົາ ເຊິ່ງເປັນ ການຕອບສະຫນອງ ຕໍ່ຄວາມມຸ່ງມາດ ປາດຖະຫນາຂອງປະຊາຊົນ ບັນດາເຜົ່າ ເປັນສັນຍາລັກແຫ່ງ ການຟື້ນຟູ, ບູລະນະ ແລະ ປົກປັກຮັກສາ ວັດທະນະທຳໂດຍສະເພາະ ມໍລະດົກ ທາງພູມ ປັນຍາ"

ຜົນຈາກກອງປະຊຸມ ສຳມະນາຄັ້ງນີ້ ຍັງອຳນວຍໃຫ້ພະແນກການ ທີ່ກ່ຽວຂ້ອງໃນແຕ່ລະແຂວງ ໄດ້ເຂົ້າໃຈ ແລະ ຮັບຮູ້ ກ່ຽວກັບພາລະກິດ ໃນການປົກປັກຮັກສາ ຫນັງສືໃບລານ, ເປີດໂອກາດໃຫ້ແຕ່ລະພາກສ່ວນ ໄດ້ແລກປ່ຽນຄວາມຄິດ ຄວາມເຫັນ ເພື່ອຊອກຫາຄວາມອາດສາມາດ ທີ່ຈະປະຕິບັດງານຮ່ວມກັນ ເພື່ອຜັນຂະຫຍາຍວຽກງານ ການປົກປັກຮັກສາ ຫນັງ ສືໃບລານ ລົງສູ່ແຕ່ລະທ້ອງຖິ່ນຕໍ່ໄປ.

# ກ່ອນຈະສວາຍເກີນໄປ

*(ຕັດຈາກບາງຕອນ ໃນບົດປະກອບຄຳເຫັນຂອງ* ***ທ່ານ ບຸນມີ ມະນີວົງ*** *ຮອງເຈົ້າແຂວງ ແຂວງ ຫລວງພະບາງ ຕໍ່ກອງປະຊຸມ ສຳມະນາ ການປົກປັກຮັກສາໜັງສືໃບລານ ທີ່ແຂວງຫລວງ ພະບາງ ວັນທີ 1-3 ເມສາ 1994 ).*



ຜ່ານໄລຍະປະຫວັດສາດອັນຍາວນານ ປະເທດລາວ ກໍ່ເປັນປະເທດໜຶ່ງ ຢູ່ໃນອາຊີ ອາຄະເນ ທີ່ມີການເຊື່ອຖືສາສະໜາພຸດ ແລະ ຍັງໄດ້ຮັກສາໄວ້ວັດທະນະທຳອັນດີງາມນຳໃຊ້ໜັງສືທຳ ແລະ ປະຕິບັດຕາມ ຄຳສັ່ງສອນ ທີ່ມີຢູ່ໃນໜັງສືຜູກໃບລານ ເຂົ້າໃນການ ເຄື່ອນໄຫວຊີວິດປະຈຳວັນ. ວັດທະນະທຳ ຄວາມເຊື່ອຖື ທີ່ໄດ້ຈາລຶກໄວ້ ໃນເອກະສານບູຮານ ຂອງປະຊາຊົນລາວ ໄດ້ກຳນົດຮູບແບບແນວຄິດ ທີ່ເນັ້ນໜັກເຖິງຄຸນຄ່າ ແຫ່ງສະຕິສັງຄົມ. ຄວາມຮັກແພງສາມັກຄີ ຖານພີ່ນ້ອງ ແລະ ການຊ່ວຍເຫລືອເຊິ່ງກັນ ແລະ ກັນຂອງທຸກຊັ້ນຄົນ ໃນສັງຄົມ ຕະຫລອດເຖິງຄວາມເມດຕາກະລຸນາ ໂດຍບໍ່ຈຳແນກຊົນຊາດ ຊົນເຜົ່າ ເນື້ອໃນຂອງໜັງສືໃບລານ ມັນຍັງໄດ້ ບົ່ງຊ້ອນເຖິງຄວາມອຸດົມຮັ່ງມີ ດ້ານສິລະປະ, ວັນນະກຳ ທັດສະນະ ປະດິດສ້າງຂອງຄົນລາວຮຸ່ນກ່ອນ ຖ້າຜູ້ໃດຮູ້ຄົ້ນຄວ້າ ແລະ ຮູ້ນຳໃຊ້ ເຂົ້າໃນພຶດຕິກຳຕົວຈິງ ກໍ່ລ້ວນແຕ່ມີປະໂຫຍດ ໃຫ້ແກ່ຊາດ ແລະ ຕົນເອງ ພາຍຫລັງປະເທດຊາດ ໄດ້ຮັບການປົດປ່ອຍມານີ້, ພັກ ແລະ ລັດຖະບານ ໂດຍສະເພາະແມ່ນກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ໄດ້ມີຄວາມພະຍາຍາມ ຟື້ນຟູປົກປັກຮັກສາ ແລະ ເສີມຂະຫຍາຍຮີດຄອງປະເພນີອັນດີງາມ ຂອງຊາດລາວຕະຫລອດມາ.

ແຂວງຫລວງພະບາງ ເປັນແຂວງໜຶ່ງ ທີ່ມີວັດວາອາຮາມປູຊະນີຍະສະຖານ, ບູຮານວັດຖຸ ຕ່າງໆ ຫລາຍແຫ່ງ ແລະ ຢູ່ວັດ ກໍ່ລ້ວນແຕ່ມີໜັງສື ຜູກໃບລານ ເຊິ່ງໄດ້ເກັບມ້ຽນ ແລະ ຮັກສາໄວ້ ໃນຍຸກປັດຈຸບັນ ຄວາມສະຫງວນນັກ ແລະ ຈິດໃຈປົກ ປັກຮັກສາ ມໍລະດົກທາງດ້ານວັດທະນະທຳອັນດີ ໄດ້ກາຍເປັນ ຄວາມມຸ່ງມາດປາດຖະໜາອັນແຮງກ້າຂອງປະຊາຊົນທຸກຊັ້ນຄົນ ແລະ ພະສົງ ສາມະເນນ ໃນແຂວງຫລວງພະບາງ, ແຕ່ໃນຕົວຈິງແລ້ວ ເນື່ອງຈາກລະດັບຄວາມຮັບຮູ້ບໍ່ທັນເຖິງ, ຍັງຂາດເຂີນທຶນຮອນ ໃນການອະນຸລັກຮັກສາ ຈຶ່ງເປັນເຫດໃຫ້ຄຸນຄ່າຂອງໜັງສືໃບລານເຫລົ່ານັ້ນ ຊຸດໂຊມໄປຕາມການເວລາ ຖ້າພວກເຮົາບໍ່ຮີບຮ້ອນປົກປັກຮັກສາ ກໍ່ຈະເຮັດໃຫ້ໜັງສືໃບລານ ສູນຫາຍໄປ ດ້ວຍເຫດນັ້ນ ການທີ່ລັດຖະບານສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ມີນະໂຍບາຍອະນຸລັກ ມໍລະດົກ ວັດທະນະທຳຂອງຊາດ ກໍ່ແມ່ນສອດຄ່ອງ ກັບຄວາມມຸ່ງມາດປາດຖະໜາຂອງປະຊາຊົນ ທຸກຊັ້ນຄົນ ໃນແຂວງຫລວງພະບາງຂອງ ພວກຂ້າພະເຈົ້າ.

# ມໍລະດົກທາງພູມປັນຍາ

*( ຄັດຈາກບາງຕອນ ຂອງບົດປະກອບຄຳເຫັນຂອງ* ***ທ່ານ ດຣ. ທອງຄຳ ອ່ອນມະນີສອນ*** *ຫົວໜ້າ ກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ ໃນກອງປະຊຸມສຳມະນາ ການປົກປັກຮັກສາ ໜັງສືໃບລານ ທີ່ແຂວງຫລວງພະບາງ ວັນທີ 1-3/4/1994 ).*



ໃນໄລຍະຜ່ານມາ ເຫັນວ່າ ການປະຕິບັດວຽກ ຂອງໂຄງການປົກປັກຮັກສາໜັງສືໃບລານ ເປັນໝາກ ຜົນ ທີ່ຈົບງາມທີ່ສຸດ, ເປັນສັນຍາລັກອັນໜຶ່ງ ທີ່ສະທ້ອນ ເຖິງການຟື້ນຟູ, ບູລະນະ ແລະ ປົກປັກຮັກສາ ວັດທະນະ ທຳລາວ, ເປັນຫົວໃຈຂອງປະຊາຊົນລາວ ເພາະຊີວິດ ຂອງ ປະຊາຊົນລາວ ຕິດພັນຢູ່ກັບວັດວາສາສະໜາ ແຕ່ວ່າຜ່ານມາ ໃນໄລຍະໜຶ່ງ ພວກເຮົາບໍ່ໄດ້ເອົາໃຈໃສ່ ປານໃດ ໂດຍສະເພາະ ມໍລະດົກທາງພູມປັນຍາ ທີ່ເຊື່ອງ ຊ້ອນຢູ່ໃນໃບລານ ຈັ່ງຊັ້ນ ໂຄງການປົກປັກຮັກສາ ໜັງສື ໃບລານ ຈຶ່ງເປັນໂຄງການໃຫຍ່ອັນໜຶ່ງ ທີ່ເປີດກວ້າງ ໃນ ການຟື້ນຟູ ວັດທະນະທຳລາວ ວັດທະນະທຳ ໃນທີ່ນີ້ ໝາຍ ເຖິງວັດທະນະທຳທາງວັດຖຸ ແລະ ຈິດໃຈ. ພາກວັດຖຸກໍ່ໄດ້ ແກ່ຕົວຄຳພີ ໃບລານນັ້ນເອງ ບໍ່ໃຫ້ເປັນເຫຍື່ອຂອງປວກ, ໜູ, ແມງກະສາບ...ທີ່ຈະມາທຳລາຍຕ້ອງການ ຈະປົກ ປັກຮັກສາໃຫ້ມີສີສັນ ສາມາດອ່ານໄດ້. ສ່ວນພາກຈິດໃຈ ກໍ່ໄດ້ແກ່ຄຸນຄ່າ ທາງວັດທະນະທຳ ທີ່ບໍ່ສາມາດ ຮຽກຮ້ອງ ຄືນມາໄດ້ ຖ້າວ່າ ມັນສູນເສຍໄປ ທີ່ປະຊາຊົນລາວທັງ ຊາດຈະຕ້ອງຮ້ອງໄຫ້ ຖ້າຫາກວ່າສູນເສຍໄປ, ທີ່ຊາດ ຈະ ຕ້ອງເສົ້າເສຍໃຈ ຖ້າຫາກວ່າ ມໍລະດົກທາງຈິດໃຈ ຖືກ ທຳລາຍ ເພາະວ່າມະຕິສູນກາງພັກ ປະຊາຊົນປະຕິວັດ ລາວ ໄດ້ວາງອອກ ວ່າດ້ວຍການພັດທະນາຊັບພະຍາ ກອນມະນຸດ ເພິ່ນໄດ້ເນັ້ນໜັກວ່າ : "ລັກສະນະຊາດ ຂອງພວກເຮົາ ຈະຕ້ອງໄດ້ເນັ້ນໃສ່ຄຳວ່າ ມີ ການສືບທອດ ຢ່າງຕໍ່ເນື່ອງ, ມີການປະສານສຳພັນຢ່າງກົມກຽວ ແລະ ມີການຕິດພັນກັນ ຢ່າງ ແໜ້ນໜຽວ ລະຫວ່າງມູນເຊື້ອ ເອກະລັກ ວັດທະນະທຳຂອງຊາດ ອັນດີງາມຂອງຊາດ ກັບຍຸກ ສະໄໝໃນ 2 ຢ່າງນີ້ ຖ້າມີແຕ່ຍົກສູງ ຟື້ນຟູ ສົ່ງ ເສີມມໍລະດົກ ວັດທະນະທຳດັ່ງເດີມ ໂດຍບໍ່ກ່ຽວພັນ ກັບ ວິທະຍາສາດຍຸກໃໝ່ ພວກເຮົາກໍ່ຈະຢູ່ໃນລັກສະນະທີ່ວ່າ ລອກແບບຄຳພີບູຮານ, ບູຮານນິຍົມ ຕິດພັນກ່ຽວກອດ ຢູ່ກັບບູຮານ, ອັນນີ້ ກໍ່ບໍ່ຖືກ. ກົງກັນຂ້າມ ຖ້າມີ ແຕ່ການ ຍົກສູງວິທະຍາສາດ ວິທະຍາການ ຄວາມຈະເລີນ ທາງ ດ້ານວັດຖຸຂອງຍຸກໃໝ່ ບໍ່ຄຳນຶງ ເຖິງມໍລະດົກ ທາງ ວັດທະນະທຳ ທີ່ເປັນ ເອກກະລັກຂອງຊາດ ທາງດ້ານ ຈິດໃຈ, ຄຸນຄ່າທີ່ສູງສົ່ງ ດ້ານພູມປັນຍາ ແລະ ຈິດໃຈ ໄດ້ເຊື່ອມ ຖອຍລົງ ດັ່ງນັ້ນ ມັນກໍ່ບໍ່ສົມດຸນກັນ.

ດັ່ງນັ້ນ ຕໍ່ການເປີດກອງປະຊຸມ ສຳມະນາຄັ້ງນີ້ ແມ່ນການນຳເອົາພູມປັນຍາ ຈາກນັກປາດ ອາຈານ ທີ່ໄດ້ເຂົ້າຮ່ວມ ມາປູກຈິດສຳນຶກ ແລະ ຄວາມຄິດໃໝ່ ຂຶ້ນມາວ່າ ຈະຕ້ອງໄດ້ປະສານສົມ ທົບກັບຍຸກສະໄໝ ກັບມໍລະດົກອັນດັ້ງເດີມຂອງເຮົາ ເພື່ອສ້າງ ເອກະລັກ ໃໝ່ຂຶ້ນມາ ບົນພື້ນຖານ ອັນດັ້ງເດີມທີ່ມີຢູ່ແລ້ວ ນີ້ແມ່ນບັນຫາສຳຄັນ.

# ບາດກ້າວໃຫມ່ທີ່ໄດ້ຮັບຜົນ

*( ຄັດຈາກບາງຕອນຂອງບົດປະກອບຄຳເຫັນ ຂອງ **ທ່ານ ນາງດາລາ ກັບລະຍາ** ຮອງຫົວຫນ້າ ກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ, ຫົວຫນ້າໂຄງການປົກປັກຮັກສາ ໃບລານລາວ ທີ່ ແຂວງຫລວງພະບາງ ເມື່ອວັນທີ 1-3 /4/94 ).*



ໃນປີທຳອິດຂອງການດຳເນີນໂຄງການ ກໍ່ເຫັນໄດ້ວ່າ ການປະຕິບັດວຽກງານຂອງພວກເຮົາ ໄດ້ປະກອບສ່ວນ ໃນການດຶງດູດຄວາມສົນໃຈຂອງມວນຊົນ ຈາກການປຸກລະດົມ, ໂຄສະນາ ເຜີຍແຜ່ ແລະ ຈາກການຈັດຕັ້ງຕົວຈິງ ທີ່ພວກເຮົາລົງໄປສູ່ມະຫາຊົນ ໄດ້ມີໂອກາດແລກປ່ຽນໂອ້ ລົມກັບມວນຊົນ ອອກວາລະສານໃບຂ່າວ ເຊິ່ງເປັນການແຈ້ງຂ່າວຕ່າງໆ ໃນແຕ່ລະ ທ້ອງຖິ່ນ ທີ່ພວກເຮົາລົງໄປສຳຫລວດ ເປັນການແລກປ່ຽນຂ່າວຄາວ ລະຫວ່າງບ້ານ-ວັດໃນແງ່ ຂອງການສຳຫລວດ. ສ່ວນວຽກງານທາງດ້ານການສຶກສາ, ການຄົ້ນຄວ້າ, ລິດຈະນາ ແລະ ພິມເຜີຍແຜ່ ພວກເຮົາຍັງໄດ້ປະກອບທຶນຮອນໃຫ້ແກ່ ພ.ສ.ລ. ສູນກາງ ຈຳນວນ 4.256.000 ກີບ ສຳລັບການສ້າງຫລັກສູດ ໂຮງຮຽນສົງ ແລະ ຈັດພິມແບບຮຽນຕ່າງໆ ໃນການປັບປຸງລະບົບການສຶກສາສົງ ຢູ່ທົ່ວຽງຈັນ. ໄດ້ມີການເຕົ້າໂຮມ ນັກຄົ້ນຄວ້າທັງອາວຸໂສ ແລະ ຫນຸ່ມນ້ອຍ ເພື່ອມາແລກປ່ຽນຄວາມຄິດຄວາມເຫັນ, ວາງແນວທາງນຳກັນ ເພື່ອຈະເລືອກເຟັ້ນຫນັງສືບູຮານ ຕ່າງໆ ອອກມາພິມ ເຜີຍແຜ່ສູ່ສັງຄົມ. ທາງດ້ານ ມະຫາວິທະຍາໄລສ້າງຄູ ດົງໂດກ ພວກເຮົາ ກໍ່ໄດ້ຈັດຕັ້ງປາຖະກາຖາໂດຍມີຊ່ຽວຊານຈາກ ສ.ສ.ເຢຍຣະມັນ, ຈາກມະຫາວິທະຍາໄລຊຽງໃຫມ່ ເພື່ອສ້າງຄວາມສົນໃຈ ໃຫ້ແກ່ຜູ້ຢາກຈະເຮັດວຽກ ໃນດ້ານນີ້.

ທາງດ້ານວິຊາການແລ້ວ ພວກເຮົາໄດ້ໃຊ້ເຕັກນິກໃນການອະນາໄມ ໂດຍໃຊ້ຝ້າຍສຳລີ ຈຸ່ມເຫລົ້າ 90 ເຊັດເພື່ອຄວາມສະອາດ ຜົນໄດ້ຮັບອັນນີ້ ມັນຈະເຮັດໃຫ້ໃບລານມີຄວາມຄົງທົນຕໍ່ໄປ ອີກຫລາຍ 10 ປີ. ຜົນໄດ້ຮັບອີກ ຢ່າງຫນຶ່ງ ກໍ່ແມ່ນການເຂົ້າຮ່ວມຂອງມວນຊົນໃນທ້ອງຖິ່ນ ໄດ້ຊ່ວຍໃຫ້ບັນຍາກາດ ຂອງການເຮັດວຽກມີຄວາມຟົດຟື້ນມ່ວນຊື່ນ, ຊ່ວຍໃຫ້ຊາວບ້ານມີຄວາມເຂົ້າໃຈ, ຮູ້ຈັກວິທີບົວລະບັດ ຮັກສາຫນັງສືໃບລານ ຂອງພວກເຂົາເຈົ້າ ຈາກນັ້ນຊາວບ້ານກໍ່ໄດ້ພົບກັບບັນຍາກາດ ອັນໃຫມ່ໃນການຟື້ນຟູ ວັດວາສາສະຫນາ ແລະ ຮີດຄອງປະເພນີອັນດີງາມ ເຮັດໃຫ້ ເຂົາເຈົ້າເຊື່ອ ຫມັ້ນຕໍ່ແນວທາງນະໂຍບາຍຂອງລັດຖະບານຕໍ່ການປົກປັກຮັກສາ ແລະ ເສີມຂະ ຫຍາຍວັດທະນະທຳຂອງຊາດ, ນອກນັ້ນພວກເຮົາຍັງໄດ້ຊອກຮູ້ ຄວາມສາມາດຂອງຊາວບ້ານໃນດ້ານຮີດຄອງປະເພນີ, ການດຳລົງຊີວິດ ທີ່ແຕກຕ່າງກັນ ຕະຫລອດເຖິງສຳນຽງສຽງເວົ້າ, ທຳນອງຂັບລຳ.

ສະນັ້ນ ຈາກຜົນສຳເລັດອັນນີ້ ໃນປີທີ 2 ຂອງໂຄງການ ພວກເຮົາກໍ່ໄດ້ກະກຽມແຜນການ ທີ່ຈະມາເຮັດວຽກດັ່ງກ່າວ ຢູ່ໃນພາກເຫນືອ ໂດຍເລືອກເອົາ ແຂວງຫລວງພະບາງເປັນຕົ້ນຕໍຕາມຄາດຫມາຍຄິດວ່າ ຈະເຮັດແຕ່ແຂວງຫລວງພະບາງ ເມື່ອຄົ້ນຄວ້າກັບທາງ ພື້ນຖານ ແລະ ບັນດາແຂວງຕ່າງໆເຫັນວ່າ ມີຄວາມສຳຄັນ ທີ່ຈະ

# ການຊ່ວຍເຫລືອເພື່ອສຳພັນທະໄມຕີ

*( ຄັດຈາກບາງຕອນ ບົດສຳເຫັນຂອງ* ***ທ່ານ ນາງ ແອັງເກີ ຄອສເນີ*** *ທູດວັດທະນະທຳ ແຫ່ງ ສ.ສ. ເຢຍຣະມັນ ປະຈຳລາວ ໃນກອງປະຊຸມສຳມະນາ ການປົກປັກຮັກສາຫນັງສືໃບລານ ຢູ່ແຂວງ ຫລວງພະບາງ ວັນທີ 1-3/4/1994 ).*



ລັດຖະບານ ສ.ສ.ເຢຍຣະມັນ ມີຄວາມພາກພູມໃຈຫລາຍ ທີ່ໄດ້ມີໂອກາດ ສະຫນັບສະຫນູນ ໂຄງການປົກປັກຮັກສາຫນັງສືໃບລານລາວ, ເຖິງວ່າ ໃນໄລຍະໃຫມ່ນີ້ ລັດຖະບານເຢຍຣະມັນ ມີຄວາມຫຍຸ້ງຍາກ ຕ້ອງຕັດງົບປະມານ ທາງດ້ານ ວັດທະນະທຳລົງຫລາຍກໍ່ຕາມ. ໂຄງການປົກປັກ ຮັກສາໃບລານລາວນີ້ ເປັນໂຄງການທີ່ໃຫຍ່ ສຳລັບລັດຖະບານເຢຍຣະມັນ ທີ່ກຳລັງຊ່ວຍເຫລືອປະ ເທດລາວ, ຂ້າພະເຈົ້າ ຂໍຢັ້ງຢືນອີກວ່າ ໂຄງການນີ້ ກຳລັງປະຕິບັດຢ່າງໄດ້ຮັບຜົນດີທີ່ສຸດ ໃນເວລານີ້, ສະນັ້ນ ຂ້າພະເຈົ້າຈຶ່ງຢາກຂໍຊົມເຊີຍມາຍັງກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ໂດຍສະເພາະແມ່ນ ຄະນະໂຄງການ ທີ່ເຮັດໃຫ້ໂຄງການນີ້ ປະສົບຜົນສຳເລັດຕະຫລອດມາ ແລະ ຄິດວ່າ ພວກເຮົາຈະປັບປຸງ ການປະຕິບັດໂຄງການນີ້ ໃຫ້ດີຂຶ້ນໄປເລື້ອຍໆ ໃນຕະຫລອດໄລຍະ ທີ່ພວກເຮົາຈະ ສືບຕໍ່ຮ່ວມມື ນຳກັນຕໍ່ໄປ.

ສຳລັບຂ້າພະເຈົ້າ ໃນຖານະທີ່ເປັນ ທູດວັດທະນະທຳ ຂອງລັດຖະບານ ສ.ສ.ເຢຍຣະມັນ ປະຈຳ ລາວ ມີຄວາມປະທັບໃຈ ທີ່ໄດ້ເຫັນວ່າ ໂຄງການນີ້ ໄດ້ຢັ້ງຢືນໃຫ້ເຫັນວ່າ ປະຊາຊົນລາວ ຍັງຮັກຫອມ ຕໍ່ວັດທະນະທຳອັນນີ້ຢູ່, ມັນເປັນໂຄງການທີ່ເຮັດໃຫ້ປະຊາຊົນເຂົ້າມາເຕົ້າໂຮມ, ມາຮ່ວມມືກັບນັກ ວິຊາການ ຫລັງຈາກທີ່ໄປເຮັດໄຮ່ ເຮັດນາ ມາເມື່ອຍແລ້ວ ກໍ່ຍັງເຂົ້າມາ ສືບຕໍ່ເຄື່ອນໄຫວ ວັດທະນະທຳ ຮ່ວມກັນຢ່າງມ່ວນຊື່ນ, ຂ້າພະເຈົ້າ ຫວັງວ່າ ໂຄງການທີ່ມາປະຕິບັດຢູ່ແຂວງຫລວງພະບາງນີ້ ກໍ່ຈະໄດ້ຮັບການຮ່ວມມື ຈາກຊາວບ້ານ,ມີການເຂົ້າຮ່ວມຢ່າງຟົດຟື້ນ ແລະ ກໍ່ຫວັງວ່າ ຊາວຫລວງພະບາງ ຈະໃຫ້ຄວາມຮ່ວມມືຢ່າງມ່ວນຊື່ນເຊັ່ນດຽວກັບບ່ອນອື່ນໆ ສິ່ງສຳຄັນ ກໍ່ຫວັງວ່າ ບັນດາ ທ່ານຄົງຈະດຶງດູດເອົາຊາວຫນຸ່ມ ນັກສຶກສາຄົນຮຸ່ນໃຫມ່ ໄດ້ເຂົ້າມາຮັບຮູ້ ແລະ ຮ່ວມໃນການເຄື່ອນໄຫວ ວຽກງານ ດັ່ງກ່າວ...

---

ລົງສູ່ 3 ແຂວງ ແລະ ເຂດພິເສດຊຽງຮ່ອນ - ຫົງສາ ໄປພ້ອມໆກັນ ຊຶ່ງອາດຈະກິນເວລາ ແຕ່ 1994 - 1995.

ດັ່ງນັ້ນ ການເຕົ້າໂຮມບັນດາທ່ານ ມາແລກປ່ຽນຄວາມຄິດ ຄວາມເຫັນນຳກັນຄັ້ງນີ້ ກໍ່ຖືວ່າ ມາທຳຄວາມເຂົ້າໃຈໃນເບື້ອງຕົ້ນ ເພື່ອຈະຊອກຫາຄວາມອາດສາມາດ ທີ່ຈະປະຕິບັດ ວຽກງານຮ່ວມກັນ ເຮັດໃຫ້ ວຽກງານການປົກປັກຮັກສາຫນັງສືໃບລານ ຢູ່ແຕ່ລະທ້ອງຖິ່ນໄດ້ຮັບ ຫມາກ ຜົນອັນຈົບງາມ.

# ນານາ ທັດສະນະ



*** ທ່ານ ສາສະດາຈານ ດຣ. ຮາຣັນ ຮຸນດີອຸສ** ຊ່ຽວຊານດ້ານຄຳພີໃບລານ ຈາກ ສ.ສ. ເຢຍຣະມັນ.

"...ມາໃນໄລຍະຫລັງໆນີ້ສີ່ມອນຊຸ້ນ ຂອງປະເທດເຢຍຣະມັນ ກໍໄດ້ຫັນມາໃຫ້ຄວາມສົນໃຈ ກ່ຽວກັບ ໂຄງການນີ້ ແລະ ກໍໄດ້ມີການສຳພາດຫລາຍໆຄັ້ງ ຈົນສຸດທ້າຍນີ້ ທາງຄະນະກຳມະທິການອຸຍແນສໂກ ຂອງປະເທດເຢຍຣະມັນ ທີ່ກຸງບອນ ໄດ້ມີມະຕິ ທີ່ຈະສະເຫນີໂຄງການນີ້ ເຂົ້າເປັນໂຄງການ ປະຈຳທົດສະວັດ ໂລກແຫ່ງວັດທະນະທຳ ເພື່ອການພັດທະນາ ຢູ່ທີ່ກຸງປາຣີ ປະເທດຝະລັ່ງ... ສິ່ງດັ່ງກ່າວນີ້ ຄົງຈະເປັນສິ່ງກະຕຸກຊຸກຍູ້ ໃຫ້ທຸກໆ ຝ່າຍມີກຳລັງໃຈ ທີ່ຈະພະຍາຍາມຮ່ວມມືຮ່ວມໃຈກັນ ໃນການທີ່ຈະອະນຸລັກສິ່ງເຫລົ່ານີ້ໄວ້"

*** ທ່ານ ສາສະດາຈານ ດຣ. ອຸດົມ ຮຸ່ງເຮືອງສີ,** ຜູ້ອຳນວຍການ ສຳນັກສົ່ງເສີມສິລະປະວັດທະນະທຳ ມະຫາວິທະຍາໄລຊຽງໃຫມ່, ປະເທດໄທ.

"ໃນບ້ານຂອງຂ້າພະເຈົ້ານັ້ນ ໃບລານຖືກທຳລາຍໄປຫລາຍແລ້ວ ແລະ ຄົນຮຸ່ນໃຫມ່ ເຂົາກໍໄປຮຽນເອົາແຕ່ພາສາອື່ນຫລາຍກວ່າພາສາພໍ່, ພາສາແມ່ ເຂົາກໍເລີຍບໍ່ຮູ້ຈັກໃນສິ່ງທີ່ໄດ້ ຕົກທອດມາເປັນມໍລະດົກ. ເມື່ອຂ້າພະເຈົ້າມາເຫັນເຖິງຄວາມພະຍາຍາມ ຂອງພີ່ນ້ອງຄົນລາວ ທີ່ໄດ້ເອົາໃຈໃສ່ ໄດ້ພະຍາຍາມ ເພື່ອຈະລຸກຂຶ້ນມາປົກປັກຮັກສາມໍລະດົກ ທາງພາສາ, ຂ້າພະ ເຈົ້າຖືວ່າການກະທຳດັ່ງກ່າວ ເປັນເລື່ອງທີ່ຍິ່ງໃຫຍ່ ແລະ ຈະຕົກທອດໄປສູ່ການເວລາອັນ ຍາວນານ..."

*** ທ່ານ ຫມ່ອມຣາຊະວົງ ຣຸດາຈະຢາ ອາພາກອນ** ຜູ້ອຳນວຍການສຳນັກຫໍສະຫມຸດ, ມະຫາວິທະຍາໄລຊຽງໃຫມ່, ປະເທດໄທ.

"... ຢູ່ໃນຂົງເຂດອາຊີຕາເວັນອອກສ່ຽງໃຕ້ ຕ່າງກໍມີວັດທະນະທຳ ທີ່ຄ້າຍຄືກັນ, ມີການບັນທຶກ ຄວາມຊົງຈຳ ທາງດ້ານວັດທະນະທຳ ບໍ່ວ່າຈະເປັນພາສາ ປະຫວັດສາດພຸທະສາສະຫນາ, ຮີດຄອງ ປະເພນີ... ໄວ້ໃນໃບລານ ແລະ ພັບສາ ແລະ ທຸກໆປະເທດນີ້ ກໍປະສົບກັບບັນຫາການພັດທະນາ ທາງດ້ານເສດຖະກິດ ແລະ ການເຂົ້າມາຂອງວັດທະນະທຳຕ່າງປະເທດ ສິ່ງເຫລົ່ານີ້ເຮັດໃຫ້ເຮົາລືມມໍລະດົກ ທາງວັດທະນະທຳ ຂອງເຮົາໄປ ຈຶ່ງຈຳເປັນຈະຕ້ອງມີ ໂຄງການຄືແນວນີ້ ເພື່ອຢັ້ງຢືນເຖິງຄວາມມີອະທິປະໄຕຂອງວັດທະນະທຳ ຂອງຊາວອາຊີ ຕາເວັນອອກສ່ຽງໃຕ້ ເອົາໄວ້ ບໍ່ໃຫ້ຖືກກືນໄປ ກັບວັດທະນະທຳສາກົນ ທີ່ກຳລັງເຂົ້າມາ ..."

*** ທ່ານ ບຸນຍົກ ແສນສຸນທອນ**

ທີ່ປຶກສາ ປະຈຳໂຄງການ.

"... ກອງປະຊຸມຄັ້ງນີ້ ແມ່ນບາດກ້າວທຳອິດ ໃນການສ້າງຄວາມສຳພັນ, ຄວາມໃກ້ຊິດຂຶ້ນມາໃນຫມູ່ຄະນະ ບຸກຄົນຫລາຍໆ ຝ່າຍທີ່ຈະມີບົດບາດ ຫນ້າທີ່ຕໍ່ໄປເພື່ອຊ່ວຍກັນ ປົກປັກ ຮັກສາຫນັງສືໃບລານ ແລະ ຟື້ນຟູຄວາມດີ - ຄວາມງາມ ທີ່ແຝງຢູ່ໃນໃບລານ..."

### * ພະອາຈານ ອ່ອນແກ້ວ

ເຈົ້າອາວາດ ວັດປາກຄານ ຫລວງພະບາງ

" ... ປັດຈຸບັນ ໂຄງການປົກປັກຮັກສາ ໜັງສືໃບລານ ເປັນແຮງຍູ້ດັນ ອັນມະຫາສານ ທີ່ດົນບັນດານໃຫ້ພະສົງສາມະເນນ ແລະ ຊາວພຸທະສາສະນິກະຊົນ ໃນແຂວງຫລວງພະບາງ ຮູ້ຮັກຮູ້ຫວງແຫນ ມີຄວາມຕື່ນຕົວ ຢາກຮູ້ ຢາກຮຽນ, ຮູ້ເຂົ້າໃຈໃສ່ຖະໜອມ ລ້ອມແປງ. ໃນນາມ ອາດຕະນາ ຕາງໜ້າໃຫ້ ພ.ສ.ລ. ແຂວງ ຈະນຳເອົາບົດຮຽນ ຈາກກອງປະຊຸມສຳມະນາ ຄັ້ງນີ້ ໄປປະຕິບັດປະຕິບັດ ໃຫ້ມີຜົນ... "

### * ທ່ານ ຄຳຫລ້າ ພົມມະລາ

ຫົວໜ້າ ພະແນກຖະແຫລງຂ່າວ ວັດທະນະທຳ ແຂວງຫລວງພະບາງ.

" ... ແຂວງຫລວງພະບາງ ເປັນແຂວງທີ່ເກົ່າແກ່ທາງດ້ານວັດທະນະທຳ ທີ່ມີວັດວາອາຮາມ, ປູຊະນີຍະສະຖານຢູ່ຫລາຍແຫ່ງ ແລະ ຢູ່ວັດຕ່າງໆ ກໍ່ລ້ວນ ແຕ່ມີໜັງສືໃບລານ ທີ່ຖືກເກັບມ້ຽນໄວ້ຕາມມີ ຕາມເກີດ ເນື່ອງຈາກລະດັບຄວາມຮູ້ຍັງອ່ອນນ້ອຍ ແລະ ຂາດເຂີນທຶນຮອນ ຈຶ່ງເປັນເຫດໃຫ້ໜັງສືເຫຼົ່ານັ້ນ ຖືກສູນເສຍໄປຈຳນວນໜຶ່ງ ການທີ່ໂຄງການ ໄດ້ມາປົກປັກຮັກສາໂດຍຖືເອົາແຂວງຫລວງພະບາງ ເປັນຈຸດຕົ້ນຕໍ ໃນການສຳຫລວດ ກໍ່ເປັນການຕອບສະໜອງ ຕໍ່ການຄອງຄອຍຂອງຊາວຫລວງພະບາງ ທີ່ຢາກຈະປົກປັກ ຮັກສາຢູ່ແລ້ວ... "

### * ທ່ານ ຍືນໄຊ ແກ້ວຍາ

ຫົວໜ້າພະແນກຖະແຫລງຂ່າວ - ວັດທະນະທຳ ແຂວງຜົ້ງສາລີ

" ... ໂດຍະທ່ານມາ ພວກເຮົາຍັງບໍ່ມີ ການຈັດຕັ້ງສຳມະນາ ເປີດກວ້າງສີແນວນີ້, ຂ້າພະເຈົ້າເອງ ກໍ່ໄດ້ຄວາມຮູ້ໃໝ່ ທີ່ບໍ່ເຄີຍໄດ້ຮ່ຳຮຽນມາກ່ອນ ຈາກການໄດ້ຮ່ຳຮຽນເຮັດໃຫ້ຂ້າພະເຈົ້າກາຍເປັນວິຊາການຜູ້ໜຶ່ງທີ່ມີລະດັບຄວາມຮູ້ສ່ວນໃດໜຶ່ງ, ວຽກງານດັ່ງກ່າວມີແຜນ ການລະອຽດສົມຄວນ, ມີການບຳລຸງກໍ່ສ້າງ ແຕ່ລະຂັ້ນຕອນ ມີບົດຮຽນ ພ້ອມນັ້ນກໍ່ມີຜູ້ໃຫ້ທຶນຊ່ວຍເຫລືອ. ມັນໄດ້ສັງລວມເຂົ້າມາຕາມທິດຂອງພັກ - ລັດທີ່ວ່າ: ແຜນເງິນ, ແຜນວຽກ, ແຜນຄົນ "

### * ທ່ານ ຄຳຜາຍ ເພັດໄຊສີ

ຫົວໜ້າພະແນກ ຖະແຫລງຂ່າວ ວັດທະນະທຳ ແຂວງອຸດົມໄຊ

" ... ຂ້າພະເຈົ້າຄິດວ່າ ການເດີນທາງຈາກອຸດົມໄຊ ມາເຖິງຫລວງພະບາງຄັ້ງນີ້ ມັນກຸ້ມຄ່າ, ຂ້າພະເຈົ້າບໍ່ເສຍດາຍເງິນຄຳ ທີ່ໄດ້ເສຍໄປ, ບໍ່ຄິດວ່າເລື່ອງວັດວາສາສະໜາ ແລະ ເລື່ອງໜັງສືໃບລານ ຈະໄດ້ຮັບການຟື້ນຟູຄືນອີກ ຂ້າພະເຈົ້າເອງ ກໍ່ບໍ່ໄດ້ຄິດເຖິງເລື່ອງນີ້ ຖ້າບໍ່ມີກອງປະຊຸມດັ່ງກ່າວ ຄົງຈະບໍ່ໄດ້ຮູ້ເຖິງຄຸນຄ່າຂອງໜັງສືໃບລານຂ້າພະເຈົ້າຄິດເສຍດາຍ ສິ່ງທີ່ໄດ້ຖືກສູນເສຍໄປ ສະນັ້ນ ສິ່ງທີ່ເຫລືອໄວ້ ຄວນຈະປົກປັກຮັກສາ ສົ່ງເສີມຄືແນວໃດ? ກອງປະຊຸມຄັ້ງນີ້ເປັນແສງສະຫວ່າງ ທີ່ເບີ່ງທາງໃຫ້ພວກເຮົາ ທີ່ຈະຕ້ອງກ້າວໄປສູ່ຜົນສຳເລັດໃໝ່ ໃນການຟື້ນຟູຊອກຄົ້ນ ສິ່ງທີ່ເຫລືອຢູ່ ມານຳໃຊ້ ໃຫ້ເກີດປະໂຫຍດແກ່ສັງຄົມ... "

### * ທ່ານ ບຸນຍົງ ຈາກ ພະແນກຖະແຫລງຂ່າວ - ວັດທະນະທຳ ເຂດພິເສດຊຽງຮ່ອນຫົງສາ

" ... ຫລັງຈາກທີ່ໄດ້ໄປຮ່ວມກອງປະຊຸມຖະແຫລງຂ່າວ ວັດທະນະທຳຄັ້ງທີ I ທີ່ນະຄອນຫລວງວຽງຈັນ ພວກຂ້າພະເຈົ້າ ກໍ່ໄດ້ເລີ່ມລົງມືຊຸດຄົ້ນເຫັນວ່າຍັງມີ ຢູ່ຢ່າງຫລວງຫລາຍເຊັ່ນ : ຊາດົກ, ອັນນະລະຕີ

ຄຳສອນ, ເຊິ່ງເປັນອຸທາຫອນ ສອນໃຈ ຫລາຍຢ່າງ. ປັດຈຸບັນ ປະຊາຊົນຍັງໄດ້ຖອດອອກມາເປັນຂັບ - ລຳ ທ້ອງຖິ່ນ ເຊັ່ນ : ຂັບລື້, ຂັບຍວນ ແລະ ຍັງຖືຫນັງສື ໃບລານເປັນສິ່ງສັກສິດ. ກອງປະຊຸມຄັ້ງນີ້ ກໍ່ຈະ ເປັນ ນິມິດຫມາຍອັນດີ ທີ່ຈະປົກ ປັກຮັກສາມູນເຊື້ອ ເຫລົ່ານັ້ນ ໄວ້ ໂດຍສະເພາະໃນແຂວງຂອງຂ້າພະເຈົ້າ ກ່ອນທີ່ມັນ ຈະບໍ່ເຫລືອ ໃຫ້ປົກປັກຮັກສາ ... "

*** ທ່ານ ບຸນສີ ບຸນຍາວົງ** ຫົວຫນ້າຜະແນກ ຖະແຫລງຂ່າວ - ວັດທະນະທຳແຂວງ ບໍ່ແກ້ວ

" ... ໂຄງການປົກປັກຮັກສາຫນັງສືໃບລານ ທີ່ໄດ້ ຮັບ ການຮ່ວມມື ແລະ ການຊ່ວຍເຫລືອ ຈາກລັດຖະບານ ສ.ສ. ເຢຍຣະມັນ ຈະເປັນການຕອບສະຫນອງ ຄວາມ ຮຽກຮ້ອງຕ້ອງ ການຂອງປະຊາຊົນ ແຂວງບໍ່ແກ້ວ ເຊິ່ງ ເຂົາເຈົ້າມີຄວາມເປັນຫ່ວງ ເປັນໃຍ ຢ້ານສິ່ງທີ່ເຂົາເຈົ້າ ເຄົາລົບບູຊາສູນເສຍໄປ. ເມື່ອໂຄງການນີ້ ໄປຮອດ ໄປເຖິງຈະນຳເອົາຄວາມເບີກບານ ມ່ວນຊື່ນ, ຄວາມດີ ອົກດີໃຈຫາອັນປຽບບໍ່ໄດ້ ໄປສູ່ບັນດາ ພະສົງສະມາເນນ ແລະ ປະຊາຊົນ ແຂວງ ບໍ່ແກ້ວ. ສຳລັບຂ້າພະເຈົ້າແລ້ວ ກໍ່ມີຄວາມເຊື່ອຫມັ້ນວ່າ ໂດຍອີງໃສ່ຜົນສຳເລັດ ຂອງ ກອງປະ ຊຸມສຳມະນາຄັ້ງນີ້ ແລະ ໂດຍການຊີ້ນຳຂອງ ຄະນະໂຄງການ ການສຳຫລວດ ແລະ ປົກປັກຮັກສາ ຫນັງສືໃບລານຢູ່ແຂວງບໍ່ແກ້ວ ຈະໄດ້ຮັບ ການຈັດຕັ້ງ ປະຕິບັດ ໃຫ້ສົມກັບຄວາມມຸ່ງມາດປາດຖະຫນາ ແລະ ຄວາມຄອງຄອຍຂອງພວກເຮົາ "

*** ທ່ານ ຄຳເສົາ** ຫົວຫນ້າ ວັດທະນະທຳ ເມືອງພຽງ ແຂວງໄຊຍະບູລີ

" ... ກອງປະຊຸມຄັ້ງນີ້ ໄດ້ເຮັດໃຫ້ພວກເຮົາ ຮູ້ໄດ້ ຄວາມສຳຄັນ ຂອງຫນັງສືໃບລານ ເປັນການປຸກ ສະຕິ ຕື່ນຕົວ ໃຫ້ຊາວພຸດທະບໍລິສັດທັງຫລາຍ ມາຊ່ວຍກັນ ໃນ ຂະບວນການອະນຸລັກ ຮັກສາ ໃຫ້ໄດ້ດີກວ່າເກົ່າ ... "

*** ທ່ານ ແສງທອງ** ຮອງຜະແນກຖະແຫລງ ຂ່າວ - ວັດທະນະທຳ ແຂວງຫລວງນ້ຳທາ.

" ... ກອງປະຊຸມດັ່ງກ່າວ ມີຄວາມຫມາຍສຳຄັນ ຫລາຍ ຕໍ່ພາລະກິດ ປົກປັກຮັກສາ ແລະ ເສີມຂະຫຍາຍ ວັດທະນະທຳ ຂອງພວກເຮົາ, ໂດຍສະເພາະ ຕໍ່ການ ອະນຸລັກ ຫນັງສືໃບລານ, ຂ້າພະເຈົ້າເອງ ກໍ່ໄດ້ຮັບ ຄວາມຮູ້ໃຫມ່ໆ ໃນການຊີ້ນຳໆພາ ດ້ານວຽກງານ ວັດ ທະນະທຳ ໂດຍສະເພາະການຊີ້ນຳ ການນຳພາ ພະສົງ ສາມະເນນ, ເຖົ້າແກ່ ແນວໂຮມ ໃຫ້ຮູ້ຈັກຄຸນຄ່າ ຂອງ ຫນັງສື ໃບລານ ເພື່ອການອະນຸລັກຮັກສາຕໍ່ໄປ ... "

*** ທ່ານ ສົມຍົດ** ຫົວຫນ້າຫ້ອງການ ແນວລາວສ້າງຊາດ ເຂດພິເສດ ຊຽງຮ່ອນ - ຫົງສາ

" ... ເປັນໂອກາດອັນດີ ໃຫ້ແກ່ແຕ່ລະພາກສ່ວນ ຜູ້ມີສ່ວນຮັບຜິດຊອບ ໃນໂຊກຊະຕາກຳ ຂອງ ວັດທະ ນະທຳລາວ ໄດ້ມາພົບປະແລກປ່ຽນ, ຖອດຖອນບົດຮຽນ ອັນອຸດົມຮັ່ງມີ ຕໍ່ວຽກງານປົກປັກຮັກສາ ບໍ່ສະເພາະແຕ່ ຫນັງສືໃບລານ, ເຮັດໃຫ້ທຸກຄົນ ເຫັນໄດ້ຄວາມຈຳເປັນ ທີ່ຈະ ໄດ້ຮ່ວມມືຮ່ວມໃຈກັນ ເພື່ອປົກປັກໃນສິ່ງທີ່ພວກເຮົາ ເຫັນວ່າ ມໍລະດົກ ອັນລ້ຳຄ່າຂອງຊາດ... "

# ມໍລະດົກທາງພາສາ ແລະ ວັນນະກຳ

*( ຄັດຈາກເນື້ອໃນບາງຕອນໃນບົດປະຖາກະຖາພາກວິຊາການ ຂອງ ທ່ານສາສະດາຈານ*

***ດຣ. ຮາຣັນ ຮຸນດິອຸສ** ຊ່ຽວຊານດ້ານຄຳພີໃບລານ ຈາກ ສ.ສ. ເຢຍຣະມັນ,*

*ທີ່ປຶກສາກິຕິມະສັກ ຂອງ ໂຄງການ )*



ຖ້າ ເວົ້າເຖິງ **ຕົວອັກສອນທັມ** ກໍເປັນທີ່ຮູ້ຈັກກັນຢູ່ວ່າ ເປັນລະບົບອັກສອນ ທີ່ແຜ່ຫລາຍ ມາຕັ້ງແຕ່ເຂດລ້ານນາ ໃນປະເທດໄທປັດຈຸບັນ ໃນເຂດແດນຂອງຫມູ່ໄທ ຂື້ນຢູ່ທາງປະເທດພະມ້າ ປັດຈຸບັນ ກໍໃຊ້ຕົວອັກຂຣະດຽວກັນ ຊາວໄທລື້ ທາງຊຽງຮຸ່ງ ກໍໃຊ້ອັກຂະຫລະແບບນີ້, ທາງຫລວງ ພະບາງ ວຽງຈັນ ຮອດຈຳປາສັກ ກໍໃຊ້ອັກຂະຫລະ ທີ່ເອີ້ນວ່າ ຕົວທັມ ຮ່ວມກັບພາກອີສານຂອງປະເທດໄທ ໃນປັດຈຸບັນ ເພື່ອທີ່ຈະບັນທຶກ ພຸທະວັຈະນະ ແລະ ເນື້ອໃນຕ່າງໆ ທີ່ມັກປາດຕັ້ງແຕ່ ສະໄຫມບູຮານ ເຫັນວ່າ ເປັນເນື້ອໃນທີ່ ສຳຄັນສົມຄວນ ແກ່ການບັນທຶກເອົາໄວ້ເປັນຫລັກຖານ ສຳລັບໃຫ້ອະນຸຊົນຮຸ່ນຫລັງ ໄດ້ສຶກສາຮ່ຳຮຽນຕໍ່ໄປ. ຖ້າຈະເວົ້າໄປ ຕົວອັກສອນທັມ ກໍແຜ່ໄປຫລາຍປະເທດ, ຫລາຍເຂດແດນ ຈະເອີ້ນໄດ້ວ່າ ເປັນ ເຂດວັດທະນະທຳ ຕົວທັມກໍໄດ້.

ຫນັງສືສຳຄັນຫລາຍໆ ເລື່ອງ ຖືກບັນທຶກຂຶ້ນເປັນຕົວທັມ ແລະ ມີການແລກປ່ຽນທາງ ວັດທະນະທຳ ມາຫລາຍຮ້ອຍປີ ເປັນທີ່ຮູ້ກັນດີ ໃນຫມູ່ນັກປະຫວັດສາດວ່າມີການນຳຄຳພີໃບລານ ມາຈາກເຂດລ້ານນາ ມາສູ່ເຂດລ້ານຊ້າງ ຕັ້ງແຕ່ສະໄຫມພະເຈົ້າໂພທິສານ ແລະ ສະໄຫມ ພະເຈົ້າໄຊ ເສດຖາທິລາດ ໃນສັດຕະວັດທີ 16, ຕໍ່ມາໄລຍະເວລາ 158 ປີກ່ອນນີ້ ກໍມີການສ້າງຕົວທັມຢ່າງຫລວງຫລາຍ ໂດຍມີຄູບາຊາວເມືອງແພ ໃນແຂວງແພ ປັດຈຸບັນ ຊື່ວ່າ ຄູບາ ກັນຈະນະ ມະຫາ ເຖລະ ກໍໄປສ້າງຕົວທັມຢູ່ໃນເຂດລ້ານນາ ແລະ ໃນຫລວງພະບາງ ໃນສະໄຫມນັ້ນ ເຊິ່ງໃນຂະນະນັ້ນມີ ພະເຈົ້າມັນທາຕຸລາດ ຄອງເມືອງຫລວງພະບາງ. ທ່ານກໍມາສ້າງທັມ ໃນວັດວິຊຸນ ໃນເມືອງຫລວງພະບາງ ແລະ ກໍມີການ ບັນທຶກໄວ້ໃນສິລາຈາລຶກວ່າ ໃນປີ ຄ.ສ. 1835 - 1836 ໃນເວລາພຽງ 1 ປີ ມີການສ້າງເຖິງ 242 ມັດມີ 2.825 ຜູກ ສ່ວນຫລາຍ ຈະເປັນ ຫນັງສື ທີ່ຫນັກໄປທາງວິ ຊາການ ທາງພຸທະສາສະຫນາ ນອກນັ້ນ ກໍຍັງມີຫນັງສື ທີ່ຫາຍາກ ຄື : ມັງສະມາລີນີ ຕຳນານພະຍາເຈືອງ, ຈາມະເທວີວົງ ເປັນ ພາສາບາລີ ແລະ ເປັນຄຳພີທີ່ມີຄຸນຄ່າ ແລະ ຫາໄດ້ຍາກໃນສະໄຫມນັ້ນ ໃນເຂດ ລ້ານນາ ຈາກເມືອງ ຫລວງພະບາງ ເອົາໄປເຜີຍແຜ່ ໃນເຂດລ້ານນາຕໍ່ໄປ.

ນອກຈາກວັນນະກຳ ທີ່ສຳຄັນເຫລົ່ານີ້ ກໍມີການຖອດກ່າຍປັນຍາສະຊາດົກ ຄື 50 ຊາດ ເຊິ່ງຖືໄດ້ວ່າເປັນມໍລະດົກ ທາງວັດທະນະທຳ ທີ່ສຳຄັນຫລາຍ ເຊິ່ງ

(ອ່ານຕໍ່ຫນ້າ 18 )

# ການເຄື່ອນໄຫວຂອງໂຄງການ ຢູ່ແຂວງຫລວງພະບາງ

**ພາຍ**ຫລັງທີ່ກອງປະຊຸມສຳມະນາ ກ່ຽວກັບວຽກງານປົກປັກຮັກສາ ໜັງສືໃບລານ ໄດ້ປິດລົງ ດ້ວຍຜົນສຳເລັດອັນດີ ໃນຕົ້ນເດືອນເມສາ, ໜ່ວຍສຳຫລວດຂອງໂຄງການປົກປັກຮັກສາໜັງສືໃບລານ ຮ່ວມກັບພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ, ເມືອງຫລວງພະບາງ ແລະ ພ.ສ.ລ. ແຂວງຫລວງພະບາງ ໄດ້ເລີ່ມຕົ້ນຈັດຕັ້ງ ການເຄື່ອນໄຫວສຳຫລວດ ແລະ ປົກປັກຮັກສາ ໜັງສືໃບລານ ຢູ່ພາຍໃນເທດສະບານເມືອງຫລວງພະບາງ ແຫລ່ງວັດທະນະທຳ ອັນເກົ່າແກ່, ມີວັດ ແລະ ໜັງສືໃບລານ ຢ່າງໜາແໜ້ນ ໂດຍເລີ່ມ ຈາກວັດປາກຄານ ເຊິ່ງແມ່ນສາທຸ ອ່ອນແກ້ວ ພະໜຸ່ມຜູ້ທ້າວທັນ ເປັນເຈົ້າອາວາດ ມີໜັງສືໃບລານທີ່ຂຶ້ນທະບຽນປົກປັກຮັກສາທັງໝົດ 81 ຜູກ ລວມມີ 36 ເລື່ອງ. ຈາກນັ້ນ ກໍ່ເຄື່ອນຍ້າຍ ມາສຳຫລວດ ຢູ່ທີ່ວັດສີລິ ມີໜັງສືທັງໝົດ 1.758 ຜູກ ລວມມີ 169 ເລື່ອງ. ວັດແສນສຸຂາຣາມ ເປັນວັດທີ 3 ທີ່ໜ່ວຍສຳຫລວດ ໄດ້ລົງເຄື່ອນໄຫວ ເຫັນວ່າ ມີໜັງສືຫລາຍກວ່າ 2 ວັດ ທີ່ຜ່ານມາ ຄືມີເຖິງ 3.330 ຜູກ ລວມມີ 25.553 ໃບລານ ມີໜັງສືສຳຄັນ ທີ່ຈະຕ້ອງຖ່າຍ ໄມໂຄຣຟິມ 928 ຜູກ ໃນນັ້ນ ມີໜັງສືເກົ່າແກ່ ອາຍຸເຖິງ 200 ກວ່າປີ, ຖືໄດ້ວ່າ ເປັນຄັງສາງເອກະສານທີ່ສຳຄັນອີກບ່ອນໜຶ່ງ ໃນແຂວງຫລວງພະບາງ, ໃນໂອກາດການຄາຣະວະ ສະຫລຸບ ວຽກງານສຳຫລວດໃນວັດນີ້ ຮອງເຈົ້າອາວາດ ວັດແສນ ໄດ້ມີຄຳເຫັນ ວ່າ:

" ນີ້ກໍ່ເປັນການສ້າງສະຕິຕື່ນຕົວ ໃຫ້ພວກເຮົາຮູ້ຄຸນຄ່າຂອງເອກະສານບູຮານ, ແມ່ນແຕ່ ຊາວຕ່າງປະເທດ ເພິ່ນກໍ່ຍັງມາຊ່ວຍເຫລືອເຮົາ, ມາຊ່ວຍຟື້ນຟູພະທຳຄຳສັ່ງສອນ, ດັ່ງນັ້ນ ພວກເຮົາທີ່ເປັນເຫລົ່າ ພຸດທະບໍລິສັດທັງຫລາຍ ກໍ່ຈະບໍ່ໃຫ້ໜ້ອຍໜ້າເພິ່ນ, ເພາະ



... ຕໍ່ໄປ ກໍ່ຍາກທີ່ຈະມີຜູ້ມາສ້າງມາສາໄວ້ຄືແນວນີ້ ມັນກໍ່ແມ່ນໜ້າທີ່ຂອງພວກເຮົາທັງຫລາຍ ທີ່ຈະສືບຕໍ່ຄົ້ນຄວ້າ, ຄວາມຮູ້ເກົ່າແກ່ເຫລົ່ານີ້ ເພື່ອເຜີຍແຜ່ໃຫ້ແກ່ຊາວພຸດທະບໍລິສັດ ຕະຫລອດເຖິງຊາວໂລກນຳອີກ "

ສ່ວນສະພາບຂອງໜັງສືໃບລານ ຢູ່ໃນວັດເກົ່າແກ່ເຫລົ່ານີ້ ຍັງຢູ່ໃນສະພາບທີ່ດີເປັນສ່ວນຫລາຍ ເນື່ອງ



ໃນທ້າຍເດືອນພຶດສະພາ ເປັນຕົ້ນມາ ຫນ່ວຍສໍາຫລວດ ໄດ້ເຄື່ອນຍ້າຍໄປສູ່ວັດໃຫມ່ ສຸວັນນະພູມມາຣາມ ນັບແຕ່ມື້ ເລີ່ມຕົ້ນສໍາຫລວດ ເຫັນວ່າບັນ ຍາກາດໃນການອະນາໄມຂອງ ພໍ່ແມ່ ປະຊາຊົນ ນໍາພາໂດຍ ນາຍບ້ານ ອຸ່ນເຮືອນ ຜູ້ໃຈດີ ພ້ອມດ້ວຍຜູ້ຊົງຄຸນວຸດທິ ພາກັນມາຊ່ວຍ ເຊັດຊອຍຖູ ເປັນຂະບວນຟົດຟື້ນ ຈຶ່ງເຮັດ ໃຫ້ວຽກງານ ດໍາເນີນໄປ ດ້ວຍ ດີ ສາມາດປົກປັກຮັກສາ ຫນັງສື ໄດ້ 4.558 ຜູກ ມີ ເອກະສານສໍາຄັນທີ່ຄວນຖ່າຍ ໄມໂຄຼຟິມ 908 ຜູກ ລວມມີ 77 ເລື່ອງ. ຫລັງຈາກອິດເມື່ອຍ ຈາກວຽກ ສໍາຫລວດແລ້ວ ກໍ່ມີການສັງສັນຮ່ວມພາເຂົ້າສາມັກຄີ ຢູ່ທີ່ເຮືອນ ຂອງນາຍບ້ານອຸ່ນເຮືອນ ເຊິ່ງມີທ່ານ ນາງ ດາຣາ ກັລຍາ ຫົວຫນ້າໂຄງການ ແລະ ພໍ່ແມ່ປະຊາຊົນ ບ້ານປ່າຂາມເຂົ້າຮ່ວມ ເສີມສ້າງບັນຍາກາດ ດ້ວຍ ການສະແດງ ຂັບທຸ້ມຫລວງພະບາງ ດ້ວຍທໍານອງ ພື້ນເມືອງ ເຮັດໃຫ້ພາເຂົ້າສາມະຄີໃນຄາບນັ້ນ ມີຊີວິດຊີ ວາຂຶ້ນຕື່ມ.

ພວກເຮົາທຸກຄົນມີຄວາມພູມໃຈຢ່າງຍິ່ງ ທີ່ຊາວ ເມືອງຫລວງພະບາງ ເຂົ້າໃຈ ແລະ ເຫັນຄວາມສໍາຄັນ ໃນການປົກປັກຮັກສາມໍລະດົກເຫລົ່ານີ້ ເຂົາເຈົ້າຈະເປັນ ເຈົ້າການ ໃນການ ອະນຸລັກຮັກສາສືບຕໍ່ໄປ.

ຈາກວ່າ ມີການເອົາໃຈໃສ່ຂອງພະສົງ ແລະ ອອກຕົນ ຍາດໂຍມ ນັ້ນເອງ ເປັນຜູ້ ປົກປັກຮັກສາ.

ຜ່ານການປະຕິບັດວຽກງານ ທາງຫນ່ວຍ ສໍາ ຫລວດໄດ້ຮັບການຊີ້ນໍາ ຢ່າງໃກ້ຊິດ ຈາກທ່ານ ນາງ ດາລາ ກັນລະຍາ ຫົວຫນ້າໂຄງການ, ນອກຈາກນັ້ນ ກໍ່ຍັງມີອໍານາດການປົກຄອງແຕ່ລະບ້ານ, ພະສົງ ສາມະ ເນນ, ເຖົ້າແກ່ແນວໂຮມ, ແມ່ອອກແມ່ຕົນ ນັກຮຽນ ໂຮງ ຮຽນວິຈິດຕະກໍາ ໄດ້ໃຫ້ການຮ່ວມມື, ມາຊ່ວຍເຊັດຊ່ວຍ ມ້ຽນຫນັງສືໃບລານ ຢ່າງເປັນຂະບວນຟົດຟື້ນ.

ການປຸກລະດົມຂົນຂວາຍ ຢ່າງກວ້າງຂວາງ ຂອງ ຫນ່ວຍສໍາຫລວດ ແລະ ຈາກສື່ມວນຊົນ ທຸກຂະແຫນງ ກໍ່ ໄດ້ເຮັດໃຫ້ຂະບວນມະຫາຊົນ ເຂົ້າຮ່ວມວຽກງານ ໃນ ຂັ້ນຕອນຕ່າງໆ ຢ່າງໄດ້ຮັບຜົນ ເຊິ່ງໄດ້ເຮັດໃຫ້ພະສົງ ແລະ ຊາວບ້ານໄດ້ສໍາຜັດ ແລະ ເຂົ້າໃຈວຽກງານ ການປົກປັກຮັກສາດ້ວຍຕົນເອງ, ຕ່າງຫນ້າ ສະຫະພັນ ແມ່ຍິງບ້ານວັດແສນ ຍັງໄດ້ສະແດງຄວາມຮູ້ສຶກວ່າ : " ຕັ້ງແຕ່ ໃດໆ ມາ ແມ່ຍິງເຮົາບໍ່ເຄີຍໄດ້ຈັບ, ບໍ່ໄດ້ບາຍ ແລະ ກໍ່ບໍ່ໄດ້ມີໂອກາດມາປະກອບສ່ວນວຽກງານ ທີ່ມີຄຸນ ຄ່າແບບນີ້ ຈັກເທື່ອ ຄັ້ງນີ້ ຖືວ່າ ແມ່ນຄັ້ງປະຫວັດສາດ ...

## ມໍລະດົກ...

(ລ່າມຕໍ່ໜ້າ 15)

ຕົ້ນສະບັບໃນເຂດລ້ານນາ ໃນສະໄໝນັ້ນ ເກືອບຈະຊອກຫາບໍ່ເຫັນ.

ໃນການສຶກສາວັນນະກຳຂອງປະເທດລາວ ກັບການສຶກສາ ວັນນະກຳ ຂອງລ້ານນາ ກໍ່ພາ ກົດວ່າ ເນື່ອງຈາກມີການແລກປ່ຽນກັນມາ ຫລາຍຮ້ອຍປີ ກໍ່ມີມໍລະດົກ ທາງວັນນະກຳຢູ່ ສ່ວນໜຶ່ງ ເຊິ່ງເຮົາຈະພົບໄດ້ທັງ 2 ບ່ອນ ເວລາເອົາຊື່ຄຳພີມາປຽບທຽບຈະຄ້າຍຄືກັນຫລາຍໆ ເລື່ອງ ໂດຍ ສະເພາະເປັນຊາດົກນອກນິບາດ ທີ່ບໍ່ໄດ້ຢູ່ໃນພະໄຕປີດົກ ທີ່ເຮົາສົມມຸດກັນເປັນຜົນງານຂອງນັກປາດ ອາຈານ ທີ່ຄິດຈະນາຂຶ້ນ. ໃນຊາດົກນອກນິບາດທັງຫລາຍ ກໍ່ມີຊາດົກ ຢູ່ຫລາຍເລື່ອງ ທີ່ໜ້າສົນໃຈ ເປັນພິເສດ ກໍ່ຍ້ອນວ່າ ໃນຊາດົກນັ້ນ ໄດ້ກ່າວເຖິງການດຳລົງຊີວິດຂອງຄົນ ໃນສະໄໝກ່ອນ ເຮົາຈະ ເຫັນການຢູ່ຮ່ວມກັນ ໃນສັງຄົມ ເຊິ່ງເປັນແບບຢ່າງອັນດີ ໃນການວາງຕົວລະຄອນ, ຕົວເອກ, ຕົວປະກອບ ທີ່ເປັນແບບຢ່າງ ຂອງຄົນບູຮານ ໃນການປະພຶດປະຕິບັດໃນສັງຄົມ.

ເຫັນວ່າ ມີລັກສະນະພິເສດຢ່າງໜຶ່ງ ໃນການຄົ້ນຄວ້າໜັງສືໃບລານ ທັງໃນແຖບຂອງ ລ້ານນາ ແລະ ໃນແຖບຂອງປະເທດລາວ ກໍ່ຄືເອກກະລັກ ທາງດ້ານວັດທະນະທຳ ຖ້າຜູ້ໃດຢາກເຂົ້າໃຈ ເຖິງນິດໄສໃຈຄໍ ແລະເອກກະລັກ ທາງດ້ານວັດທະນະທຳ ຂອງອີງເຂດນີ້ ຢາກຮູ້ເຖິງຈຸດແຕກ ຕ່າງ ກໍ່ນຳເອົາວັນນະກຳບູຮານ ໃນອີງເຂດນີ້ ມາສົມທຽບ ກໍ່ຈະເຂົ້າໃຈເອກກະລັກຂອງແຕ່ລະບ່ອນ ເພາະວ່າ ເຮົາຊື່ເບິ່ງສະເພາະ ແຕ່ວັນນະກຳຂອງຄົນເອງນັ້ນ ລາງເທື່ອ ເຮົາກໍ່ຍັງບໍ່ເຂົ້າໃຈເຖິງ ຄວາມສະເພາະຂອງວັນນະກຳໄດ້.



## ລຸງສອນຫລານ

( ຕໍ່ຈາກໜ້າ 20)

| | |
|---|---|
| ພວກຊ່າງເອົາທາກຂະຊູດກ້ຽງ | ແປງແລ້ວຈິ່ງງາມ |
| ຄັນວ່າ ຫຽວທາງນ້ຳ | ປະສົງເຮືອລຳໃຫຍ່ ຫລານເຮີຍ |
| ຄັນຊິເຂົ້າປ່າກວ້າງ | ໃຫ້ຫາເທົ້າຊ່ອຍຕີນ ແທ້ນາ |
| ຄຳນີ້ດາສອນໃຫ້ | ຫລານເຫລັນຈຳຈື່ ເອົາທ້ອນ |
| ຄັນຫາກກິນເຂົ້າແລ້ນ | ໃຫ້ຫານ້ຳລ່ອງລົງ |
| + ຄັນຊິຝັນຂວານໃຫ້ | ຖາມຫີນເສຍກ່ອນ |
| ຄັນວ່າຫີນບໍ່ພ້ອມ | ແປງໄດ້ກໍ່ບໍ່ງາມ |
| ຄັນຊິທຳນາໃຫ້ | ຖາມຄວາຍເສຍກ່ອນ |
| ຄັນວ່າ ຄວາຍບໍ່ພ້ອມ | ຢ່າຄຶງເຂົ້າໃສ່ໄຖ |
| ຄັນວ່າ ເຈົ້າມີໄຫມແລ້ວ | ຢ່າລືມຄຸນມ້ອນຄ່ອາງ |
| ມ້ອນຫາກແປງເສັ້ນຍຸ້ງ | ຍອງໃຫ້ກໍ່ຈິ່ງມີ |
| ຄຳນີ້ ດູປະເສີດແທ້ | ໃຫ້ຄຶດຢັ່ງຄຸນຫລັງ |
| ຢ່າໄດ້ວົ້ວງ ສຽວ | ຕໍ່ປຸນພາຍໜ້າ |
| + ບຸນມີຍັງໃຫ້ຜີ້ | ຜີສອງສາມສີ່ ຫລານເຮີຍ |
| ຢ່າໄດ້ຈາໂອດອ້າງ | ໂງແງ້ນແຕ່ຕົວ |
| ບັບພະໂຕໃຫ້ | ຖາມ ໂພນຂີ້ປວກ ດູນັ້ນ |
| ຄັນວ່າປວກບໍ່ພ້ອມ | ຄູນໄດ້ກໍ່ບໍ່ສູງ |
| + ຢ່າໄດ້ຫລັບຜອກພື້ນ | ເມົາແຕ່ກາມ |
| ມັນຈັກເພພັງເສຍ | ເວດທະນາມື້ມົ້ວ |
| ຢາໄດ້ເມົາມົວສ້າງ | ພະລີຍາເປັນເພື່ອນ ຫລານເຮີຍ |
| ໃຫ້ລ່ອຍຄຶດຕໍ່ຕັ້ງ | ບຸນນັ້ນເພື່ອນເຮົາ |
| ເນື້ອບໍ່ເປັນຕ່ອນຢ້າງ | ຊິເອົາພ້າປາດເສຍ |
| ຄັນວ່າກວຍຫຍໍ້ກວຍ | ຂາດທູເສຍບ້າງ |
| ອັນນີ້ ສັບເພໃຫ້ | ຝູງຫລານຈຳຈື່ ເອົາທ້ອນ |
| ຂັບບໍ່ມີປີພ້ອມ | ຊາວສະຫລ້ານຫາກຊິຫົວ . |

✻




# ລຸງສອນຫລານ

*ເກັບກຳໂດຍ :* ***ຈານຄຳມີ***

*ແນວໂຮມບ້ານກອງລໍ່, ເມືອງຫີນບູນ ແຂວງຄຳມ່ວນ*

ການທີ່ນຳເອົາເລື່ອງລາວ ທີ່ສຳຄັນຢູ່ໃນ ໜັງສື ໃບລານມາເຜີຍແຜ່ນັ້ນ ມີຄຸນປະໂຫຍດຢ່າງລົ້ນເຫລືອ ໃຫ້ແກ່ຜູ້ຄົນໃນສັງຄົມ ບໍ່ວ່າ ຈະເປັນກາບກອນ, ພະທຍາ ພາສິດ, ໂອວາດຄຳສອນ, ວັນນະຄະດີບູຮານ ກໍ່ລ້ວນແຕ່ ມີເນື້ອຫາສາລະມາກມາຍ ກາຍເປັນຄະຕິຄຳສອນ ໃຫ້ແກ່ຄົນທົ່ວໄປ ... "

ລຸງສອນຫລານ ນັບໄດ້ວ່າ ເປັນໜັງສື ຍອດຄຳ ສອນ ບູຮານ ຂອງບັນພະບຸລຸດລາວເຮົາ ມີແບບໜຶ່ງ ທີ່ມີຄຸນຄ່າ ໃນທາງດ້ານການອົບຮົມສັ່ງສອນ, ໃຫ້ ຄວາມ ຮູ້, ໃຫ້ຂໍ້ຄິດອັນເປັນຄະຕິສອນໃຈ ໃຫ້ແກ່ ທຸກຄົນ ໄດ້ຢ່າງ ເລິກເຊິ່ງ. ໃນທີ່ນີ້ ຈະຍົກເອົາບາງບົດ ບາງຕອນ ຂອງ ໂອວາດຄຳສອນດັ່ງກ່າວ ທີ່ ໄດ້ຖອດອອກມາຈາກ ໜັງສື ໃບລານວັດກອງຫລໍ່ເມືອງຫີນບູນ ແຂວງຄຳມ່ວນ.

\+ ບັດນີ້ ອ້າຈັກໂນທະນາບ້ອມ  ຄຸນຄູຜູ້ສະຫລາດ
ອໍ່ແກໄຕຍະຍອດແກ້ວ  ຄຳສະຫລັ້ງສັ່ງສອນ
ເຈົ້າຜູ້ພະທຍາແຫລມສ້ຽນ  ເຂັມທອງທາງເທດ
ຄອນທ້າຍຫາກເປັນລຸ່ມລູ້  ຍັງຊິສ້ຽມກວ່າເຂັມ ບໍ່ເດ
ຄັນເຈົ້າຫາກມີເຂັມແລ້ວ  ໃຫ້ຖາມໄໝດູກ່ອນ
ໄໝບໍ່ມີຮອຍກົ້ນ  ສິນໄດ້ກໍ່ບໍ່ງາມ
ຄັນຊິຫໍ່ຜືນຜ້າ  ໃຫ້ຫາຄູຜູ້ເຜີ່ນຊ່າງ
ເອົານັ້ນ ເປັນຜູ້ເຢາະຢ່ອງແຕ້ມ  ແປງໃຫ້ກໍ່ຈຶ່ງງາມ
ຫລານຢ່າໄດ້ໂອດອ້າງ  ກະທຳລື່ນຄູສອນ ນັ້ນເນີ
ເອົາຊິວ່າແນວປູນາ  ປາກເປັນສະຫາວພົ້ນ
ທຳຕົນໃຫ້  ຄືຄຸນເຮືອຊ່ວງ ຫລານເຮີຍ

( ອ່ານຕໍ່ໜ້າ 19)

ເຈົ້າຂອງ
ໂຄງການປົກປັກຮັກສາໜັງສືໃບລານລາວ
ສຳນັກງານ
ກະຊວງການຖະແຫຼງຂ່າວ ແລະ ວັດທະນະທຳ
ຕູ້ ປ.ນ. 1631 ໂທລະສັບ 213029
ພິມທີ່ ວາລະສານ ວັນນະສິນ

ຄະນະຈັດທຳ
ຫົວໜ້າ ບັນນາທິການ : ດາວຄາ ກັລຍາ
ຜູ້ຊ່ວຍ ບັນນາທິການ : ຈັນສະມຸດ ທິລະກຸນ
ຄອມພິວເຕີ : ຄຳນັກ ວົງສັກດາ
ໂອທອງ ຄຳອິນຊູ